# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

10 - 16 ກັນຍາ 2023
ປີທີ 12
ສະບັບທີ 937
ລາຍສັບປະດາ


## ພິທີລົງນາມຂໍ້ຕົກລົງການຮ່ວມມື ລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປ ຈີນ



(ສພຊ) ເພື່ອປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດແລະການເປັນຄູ່ຮ່ວມຊະຕາກຳສັງຄົມນິຍົມລາວ-ຈີນ, ຈີນ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະສະພາຜູ້ແທນທົ່ວປະເທດແຫ່ງ ສປ ຈີນ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງໆຂຶ້ນ. ໃນວັນທີ 4 ກັນຍາ 2023, ທີ່ນະຄອນຫຼວງປັກກິ່ງ, ສປ ຈີນ, ສະພາແຫ່ງຊາດ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ



ສືບຕໍ່ຍົກສູງຂີດຄວາມສາມາດ...

(ໜ້າ 3)



ລາຄາເຂົ້າໃນຕະຫຼາດໂລກ...

(ໜ້າ 11)




ແກ້ໄຂບັນຫາສາເສບຫມ...

(ໜ້າ 12)

## ສືບຕໍ່ປະເມີນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດສະພາແຫ່ງຊາດ



(ສພຊ) ໃນລະຫວ່າງວັນທີ 4-5 ກັນຍາ 2023, ທີ່ຫ້ອງວ່າການປົກຄອງເມືອງອານຸວົງ ແຂວງໄຊສົມບູນ ໄດ້ມີກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ພອຍຄຳ ຮຸ່ງບຸນຍວງ ເຈົ້າແຂວງໆໄຊສົມບູນ, ມີປະທານສະພາປະຊາຊົນແຂວງໄຊສົມບູນ, ບັນດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ ໄດ້ຮັບຟັງບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາ

ອ່ານຕໍ່ໜ້າ 2

## ຜົ້ງສາລີ ຈັດກອງປະຊຸມປະເມີນກົດໝາຍ




(ສພຊ) ວັນທີ 4-5 ກັນຍາ 2023 ທີ່ຫ້ອງປະຊຸມສະພາສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ປະກອບຄຳເຫັນຕໍ່ກົດໝາຍ 4 ສະບັບຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີທ່ານ ຄຳຜອຍ ວັນນະສານ ກຳມະການສູນກາງພັກ ເລຂາພັກແຂວງ, ເຈົ້າແຂວງໆຜົ້ງສາລີ, ທ່ານ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ,

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ພົບປະຜູ້ມີສິດເລືອກຕັ້ງ ຢູ່ 4 ເມືອງໃຕ້



(ສພຊ) ເນື່ອງໃນໂອກາດເຄື່ອນໄຫວພົບປະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຢູ່ບັນດາ 4 ເມືອງໃຕ້ຂອງແຂວງໄຊຍະບູລີ ໃນວັນທີ 5 ກັນຍາ 2023 ທ່ານ ພທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ໄດ້ເຄື່ອນໄຫວພົບປະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຢູ່ບ້ານຜາລຽບ ເມືອງປາກລາຍ ແຂວງໄຊຍະບູລີ ໂດຍການເຂົ້າຮ່ວມຂອງທ່ານ ກອງສີ ວົງສີ ເຈົ້າເມືອງເມືອງປາກລາຍ, ມີບັນດາທ່ານຕິດຕາມຄະນະ, ເລຂາພັກບ້ານ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານ

ອ່ານຕໍ່ໜ້າ 4

## ປະທານ ກຕທ ພົບປະເຮັດວຽກກັບຄະນະກຳມາທິການຂອງສະພາສູງ ສ. ອາເມຣິກາ




(ສພຊ) ໃນທ້າຍເດືອນສິງຫາ 2023 ຜ່ານມານີ້, ທີ່ສະພາແຫ່ງຊາດ ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດລາວ ໄດ້ຕ້ອນຮັບ ແລະ ພົບປະກັບທ່ານ Alec Carnes ວິຊາການອາວຸໂສ, ກຳມາທິການການອະນຸມັດ-ຈັດສັນງົບປະມານ, ອະນຸກຳມະການການດຳເນີນງານຕ່າງປະເທດ ແລະ ບັນດາໂຄງການທີ່ກ່ຽວຂ້ອງ, ສະພາສູງຂອງສະຫະລັດອາເມຣິກາ, ຫົວໜ້າຈັດຕັ້ງພະນັກງານຂອງພັກເດໂມແຄຣັດ (Democrat).

ໃນໂອກາດດັ່ງກ່າວ, ປະທານກຳມາທິການການຕ່າງປະເທດ

ອ່ານຕໍ່ໜ້າ 4

## ຍົກສູງຂີດຄວາມສາມາດດ້ານທັກສະ ໃຫ້ ສສຂ 3 ແຂວງພາກເໜືອ

(ສພຊ) ໃນລະຫວ່າງວັນທີ 4-5 ກັນຍາ 2023 ທີ່ສະໂມສອນແຂວງຫຼວງນ້ຳທາ ໄດ້ມີກອງປະຊຸມຍົກສູງຂີດຄວາມສາມາດດ້ານທັກສະການຕິດຕາມກວດກາ, ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ການຊັກຖາມ ແລະ ການປະກອບຄຳເຫັນ, ການລົງພົບປະຜູ້ມີສິດເລືອກຕັ້ງ ໃຫ້ແກ່ສະມາ




ຊິກສະພາປະຊາຊົນຂັ້ນແຂວງ (ສສຂ) 3 ແຂວງພາກເໜືອ ຄື: ອຸດົມໄຊ, ຫຼວງນ້ຳທາ ແລະ ບໍ່ແກ້ວ ໂດຍການເປັນປະທານຂອງທ່ານ ສຸບັນ ສະອະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ສາຍອູ ພູມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ມີຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ສະມາຊິກ

ອ່ານຕໍ່ໜ້າ 4

## ພິທີລົງນາມ...

(ຕໍ່ຈາກໜ້າ 1)

ແຫ່ງ ສປປ ລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປ ຈີນ ໄດ້ລົງນາມໃນຂໍ້ຕົກລົງການຮ່ວມມື ຮ່ວມກັນ ລະຫວ່າງ ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດລາວ ແລະ ສະຫາຍ ຈ້າວ ເລີ້ ຈີ້ ກຳມະການຄະນະປະຈຳກົມການເມືອງສູນກາງພັກຄອມມູນິດຈີນ, ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ.

ຂໍ້ຕົກລົງການຮ່ວມມືດັ່ງກ່າວ ເປັນນິຕິກຳອັນໜຶ່ງທີ່ມີຄວາມໝາຍດ້ານປະຫວັດສາດ ແລະ ເປັນບ່ອນອີງອັນສຳຄັນ ໃນການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດ ລາວ-ຈີນ ໂດຍສອງຝ່າຍໄດ້ເຫັນດີເປັນເອກະພາບຕໍ່ເນື້ອໃນຂໍ້ຕົກລົງການຮ່ວມມື ຄື: ຈະສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະມິດຕະພາບລັດຖະສະພາ ແລະ ວິຊາການຮ່ວມກັນ; ຊຸກຍູ້ການແລກປ່ຽນ, ການໄປມາຫາສູ່ກັນ ລະຫວ່າງສະພາປະຊາຊົນຂັ້ນແຂວງ ຂອງ ສປປ ລາວ ແລະ ສະພາປະຊາຊົນຂັ້ນທ້ອງຖິ່ນ ຂອງ ສປ ຈີນ; ສອງຝ່າຍ ຮ່ວມກັນພັດທະນາຊັບພະຍາກອນມະນຸດ ໂດຍຜ່ານການແລກປ່ຽນບົດຮຽນ ແລະ ປະສົບການ, ແລກປ່ຽນຂໍ້ມູນຂ່າວສານ ໂດຍການຈັດກອງປະຊຸມຝຶກອົບຮົມ, ສຳມະນາ ແລະ ກອງປະຊຸມລະບົບທາງໄກ ຂໍ້ຕົກລົງສະບັບນີ້ມີອາຍຸການນຳໃຊ້ 5 ປີ ແຕ່ປີ 2023-2027 ແລະ ສາມາດຕໍ່ໄດ້ຕື່ມອີກຕາມການຕົກລົງສອງຝ່າຍ.

ກ່ອນພິທີລົງນາມໃນຂໍ້ຕົກລົງການຮ່ວມມື, ປະທານສະພາແຫ່ງຊາດລາວ ແລະ ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ກໍໄດ້ພົບປະສອງຝ່າຍ ເພື່ອຮ່ວມກັນຕີລາຄາຄືນ ການພົວພັນ ແລະ ການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ລາວ-ຈີນ ໃນໄລຍະຜ່ານມາ; ສອງຝ່າຍ ໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ຈົນຮອດຂັ້ນວິຊາການນັບແຕ່ສູນກາງຈົນຮອດທ້ອງຖິ່ນ, ແລກປ່ຽນບົດຮຽນ, ປະສົບການ ແລະ ຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ, ມີການແລກປ່ຽນສານຊົມເຊີຍໃນໂອກາດທີ່ມີການເລືອກຕັ້ງການນຳຂອງສອງສະພາ ໃນແຕ່ລະຊຸດນຳກັນ, ສານສະແດງຄວາມເຫັນໃຈໃນເວລາເກີດໄພພິບັດທາງທຳມະຊາດ, ຈັດຕັ້ງກອງປະຊຸມສຳມະນາ, ທັດສະນະສຶກສາ ແລະ ການຝຶກອົບຮົມ. ໃນນີ້, ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ໃຫ້ທຶນແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານວິຊາການ ເຂົ້າຮ່ວມການຝຶກອົບຮົມ ໃນການຍົກລະດັບດ້ານວິຊາສະເພາະ, ວິຊາການ ແລະ ຮຽນຮູ້ກ່ຽວກັບລະບົບການເມືອງ, ການປົກຄອງ ແລະ ການພັດທະນາເສດຖະນາເສດຖະກິດ-ສັງຄົມ ຢູ່ ສປ ຈີນ. ນອກຈາກນີ້, ສອງຝ່າຍ ຍັງໄດ້ຮ່ວມມື ແລະ ສະໜັບສະໜູນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຈະໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນແກ່ສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື AIPA ຄັ້ງທີ 45 ເຊິ່ງຈະຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ໃນເດືອນຕຸລາ 2024.

ພ້ອມດຽວກັນນີ້, ສອງຝ່າຍ ເຫັນດີເປັນເອກະພາບກັນ ໃນການສືບຕໍ່ຊຸກຍູ້ ແລະ ສົ່ງເສີມສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊະຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ. ອັນພົ້ນເດັ່ນກວ່າໝູ່ແມ່ນການຈັດຕັ້ງປະຕິບັດຂໍ້ລິເລີ່ມ ໜຶ່ງແລວ ໜຶ່ງເສັ້ນທາງ ໂດຍແມ່ນການສ້າງເສັ້ນທາງລົດໄຟດ່ວນລາວ-ຈີນ ເຊິ່ງເປັນສັນຍາລັກອັນສຳຄັນແຫ່ງການພົວພັນຮ່ວມມື ກໍຄືການເຊື່ອມໂຍງເຊື່ອມຈອດ, ເປັນເສັ້ນທາງແຫ່ງມິດຕະພາບ ແລະ ນຳເອົາຄວາມຜາສຸກມາສູ່ປະຊາຊົນສອງຊາດລາວ-ຈີນ.

ສຳລັບການຮ່ວມມືທາງດ້ານເສດຖະກິດສອງປະເທດລາວ-ຈີນ ໄດ້ມີໝາກຜົນສຳເລັດອັນໃໝ່ ເປັນຕົ້ນແມ່ນ ສປ ຈີນ ເປັນອັນດັບໜຶ່ງຂອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ ຊຶ່ງມີ 834 ໂຄງການ ລວມມູນຄ່າ 16 ຕື້ກວ່າໂດລາເປັນປະເທດຄູ່ການຄ້າໃຫຍ່ອັນດັບສອງຂອງ ສປປ ລາວ, ມີມູນຄ່າການຄ້າລາວ-ຈີນ ໃນປີ 2022 ບັນລຸໄດ້ 5 ຕື້ກວ່າໂດລາ. ຂະນະດຽວກັນນັ້ນ, ການຮ່ວມມືດ້ານການທ່ອງທ່ຽວ ກໍນັບມື້ນັບໄດ້ຮັບການຂະຫຍາຍຕົວ, ມີນັກທ່ອງທ່ຽວຂອງລາວກໍໄດ້ໄປທ່ອງທ່ຽວຢູ່ຈີນ ມີຈຳນວນຫຼາຍຂຶ້ນ ແລະ ນັກທ່ອງທ່ຽວຈີນ ກໍຈັດຢູ່ໃນອັນດັບ 2 ຂອງນັກທ່ອງທ່ຽວຕ່າງປະເທດມາທ່ອງທ່ຽວລາວ ໃນປີ 2022 ມີຈຳນວນ 4 ແສນກວ່າເທື່ອຄົນ.

## ສືບຕໍ່...

(ຕໍ່ຈາກໜ້າ 1)

ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໂອກາດນີ້, ປະທານກອງປະຊຸມ ໄດ້ມີຄຳເຫັນຕໍ່ເນື້ອໃນການປະເມີນຄັ້ງນີ້ ຈະໄດ້ສຸມໃສ່ຕີລາຄາເບິ່ງການໂຄສະນາເຜີຍແຜ່ແຕ່ລະກົດໝາຍເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍແນວໃດ? ມີມາດຕາໃດແດ່ທີ່ສອດຄ່ອງສາມາດປະຕິບັດໄດ້? ມີມາດຕາໃດແດ່ສອດຄ່ອງຢູ່ແຕ່ປະຕິບັດໄດ້ຍາກ? ມີມາດຕາໃດແດ່ທີ່ບໍ່ສອດຄ່ອງຕ້ອງໄດ້ປັບປຸງ? ມີມາດຕາໃດແດ່ທີ່ຊໍ້າຊ້ອນກັບກົດໝາຍອື່ນ ເຊິ່ງຕ້ອງໄດ້ປັບປຸງໃຫ້ລະອຽດຈະແຈ້ງ? ມີບັນຫາໃດແດ່ທີ່ຄວນເພີ່ມເປັນມາດຕາໃໝ່? ບັນຫາທີ່ພົວພັນກັບກົດໝາຍອື່ນເຊັ່ນ: ກົດໝາຍວ່າດ້ວຍລັດຖະບານແລະກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ; ກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ; ກົດໝາຍວ່າດ້ວຍການກວດກາລັດ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ; ກົດໝາຍວ່າດ້ວຍການລົງທຶນຂອງລັດ; ກົດໝາຍວ່າດ້ວຍງົບປະມານ ເປັນຕົ້ນ? ສັງເກດຕີລາຄາການຈັດຕັ້ງປະຕິບັດແຕ່ລະກົດໝາຍ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ? ມີດ້ານດີ, ດ້ານຄົງຄ້າງແນວໃດ? ຈະຕ້ອງປັບປຸງແກ້ໄຂແນວໃດຈຶ່ງສອດຄ່ອງ? ກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນຫຼາຍ, ມີເນື້ອໃນກວ້າງຂວາງ, ເລິກເຊິ່ງ ແລະ ພົວພັນເຖິງການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 1991 ຄົບຮອບ 32 ປີ ແລະ ສະບັບປີ 2015 ຄົບຮອບ 7 ປີ, ແຕ່ເວລາມີພຽງ 2 ວັນ ເທົ່ານັ້ນ ຈຶ່ງຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມ ຈົ່ງໄດ້ເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງແຕ່ລະກົດໝາຍ ຕາມວາລະກອງປະຊຸມໃຫ້ມີຈຸດສຸມ, ຮັກສາເວລາ. ຄຳເຫັນຂອງບັນດາທ່ານ ຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ວິເຄາະວິໄຈ ປັບປຸງກົດໝາຍແຕ່ລະສະບັບ ເຮັດໃຫ້ແຕ່ລະກົດໝາຍມີເນື້ອໃນຈະແຈ້ງ, ຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ ດ້ວຍຄຸນນະພາບສູງ ທັງນີ້, ກໍເພື່ອເປັນບ່ອນອີງໃຫ້ການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມຮ່າງກົດໝາຍ 4 ສະບັບມີຄວາມເໝາະສົມກັບສະພາບຕົວຈິງ, ສອດຄ່ອງກັບກົດໝາຍ ແລະ ຮັບປະກັນປະສິດທິພາບ; ເພື່ອເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດ ຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 4 ສະບັບໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນານຳເຂົ້າກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ກຸກກົກ ບຸດດາໄຊ)**



## ເລື່ອງເດັ່ນ ຂ່າວເດັດ

***# ຄັດໂດຍ: ຫອມສະນິດ***

*❐ ທົ່ວນະຄອນຫຼວງວຽງຈັນ ມີໂຮງຮຽນລ້ຽງເດັກ-ອະນຸບານ ທັງໝົດ 401 ແຫ່ງ, ໂຮງຮຽນລັດ 121 ແຫ່ງ, ໂຮງຮຽນເອກະຊົນ 280 ແຫ່ງ, ມີນັກຮຽນທັງໝົດ 38.212 ຄົນ, ຍິງ 18.768 ຄົນ, ໂຮງຮຽນລັດ 11.371 ຄົນ, ຍິງ 5.546 ຄົນ, ໂຮງຮຽນເອກະຊົນ 26.841 ຄົນ, ຍິງ 13.219 ຄົນ, ຄູສອນທັງໝົດ 2.777 ຄົນ, ຍິງ 2.745 ຄົນ, ໂຮງຮຽນລັດ 630 ຄົນ, ຍິງ 625 ຄົນ, ໂຮງຮຽນເອກະຊົນ 2.147 ຄົນ, ຍິງ 2.120 ຄົນ; ຊັ້ນປະຖົມສຶກສາ ມີທັງໝົດ 545 ແຫ່ງ, ໃນນີ້ ມີໂຮງຮຽນເອກະຊົນ 189 ແຫ່ງ, ໂຮງຮຽນລັດ 356 ແຫ່ງ, ມີນັກຮຽນທັງໝົດ 79.387 ຄົນ ຍິງ 38.022 ຄົນ, ໂຮງຮຽນລັດ 44.640 ຄົນ, ໂຮງຮຽນເອກະຊົນ 34.747 ຄົນ, ມີຄູສອນທັງໝົດ 3.489 ຄົນ, ຍິງ 2.682 ຄົນ; ຊັ້ນມັດທະຍົມສຶກສາ ມີ ທັງໝົດ 192 ແຫ່ງ, ມີນັກຮຽນ 86.628 ຄົນ, ຍິງ 43.149 ຄົນ, ໂຮງຮຽນເອກະຊົນ 86 ແຫ່ງ, ຈຳນວນນັກຮຽນ 19.900 ຄົນ, ຍິງ 9.355 ຄົນ, ໂຮງຮຽນລັດ ມີ 106 ແຫ່ງ, ມີນັກຮຽນ 66.728 ຄົນ, ຍິງ 33.794 ຄົນ, ມີຄູສອນທັງໝົດ 4.097 ຄົນ, ຍິງ 2.320 ຄົນ.*

***ໜສພ. ປະຊາຊົນ 04/09/2023***

*❐ ສະຫະພາບເອີຣົບ (EU) ໄດ້ອະນຸມັດເງິນຊ່ວຍເຫຼືອລ້າມູນຄ່າ 18,40 ລ້ານເອີໂຣ ໃຫ້ລັດຖະບານລາວ ເພື່ອນຳໃຊ້ເຂົ້າໃນການດຸນງົບປະມານ (Budget Support) ຈາກການຈັດຕັ້ງປະຕິບັດ 2 ແຜນງານ ຄື: ແຜນງານສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຂະແໜງສຶກສາແຕ່ປີ 2018-2021 ເພື່ອຊຸກຍູ້ການຈັດຕັ້ງປະຕິບັດບັນດານະໂຍບາຍໃນແຜນພັດທະນາຂອງຂະແໜງສຶກສາໃຫ້ສຳເລັດຕາມຄາດໝາຍ ໂດຍສະເພາະວຽກງານສະໜັບສະໜູນໃຫ້ທຸກຄົນໄດ້ເຂົ້າເຖິງການສຶກສາຢ່າງໜ້ອຍຂັ້ນພື້ນຖານ (ຊັ້ນປະຖົມ ແລະ ມັດທະຍົມ), ການປັບປຸງຄຸນນະພາບຂອງການສຶກສາ ແລະ ການຄຸ້ມຄອງຂອງລັດຖະບານໃນຂະແໜງການດັ່ງກ່າວ ແລະ ແຜນງານສະໜັບສະໜູນວຽກງານໂພຊະນາການ ເລີ່ມແຕ່ປີ 2019-2022 ເພື່ອສະໜັບສະໜູນການຫຼຸດຜ່ອນການຂາດແຄນອາຫານ ໂດຍສຸມໃສ່ເພດຍິງ ແລະ ກຸ່ມທີ່ດ້ອຍໂອກາດ.*

***ໜສພ. ປະເທດລາວ 05/09/2023***

*❐ ລັດຖະບານ ໄດ້ອອກຄຳສັ່ງໃຫ້ກະຊວງການເງິນ ຊຸກຍູ້ສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ ໂດຍສະເພາະການຮັບຊຳລະສິນຄ້າ ແລະ ຄ່າບໍລິການເປັນເງິນກີບຢູ່ພາຍໃນປະເທດ, ພ້ອມທັງກວດກາທຸລະກຳເງິນຕາຕ່າງປະເທດທີ່ບໍ່ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ, ຄຸ້ມຄອງລາຍຮັບງົບປະມານແຫ່ງລັດທີ່ເປັນເງິນຕາຕ່າງປະເທດ ໃຫ້ເຄື່ອນໄຫວຜ່ານກະຊວງການເງິນ ແລະ ຝາກໄວ້ລວມສູນນຳທະນາຄານ ແຫ່ງ ສປປ ລາວ.*

***ໜສພ. ປະເທດລາວ 06/09/2023***

## ຝັ່ງສາລີ...

(ຕໍ່ຈາກໜ້າ 1)

ມີບັນດາກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ອະດີດສະມາຊິກສະພາແຫ່ງຊາດ, ສອງກອງບັນຊາການທະຫານ-ຕຳຫຼວດ, ເຈົ້າເມືອງ 7 ເມືອງ, ອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາ, ພ້ອມດ້ວຍພະນັກງານ-ລັດຖະກອນ ຈາກສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ກ່າວວ່າ: ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍ ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ເມື່ອກົດໝາຍດັ່ງກ່າວ ໄດ້ຖືກຮັບຮອງແລ້ວຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ໃນໄລຍະຜ່ານມາ, ກົດໝາຍ 4 ສະບັບນີ້ ນັບແຕ່ວັນຮັບຮອງສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ ເຊັ່ນ: ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງປັບປຸງມາແລ້ວ 5 ຄັ້ງ, ກົດໝາຍວ່າດ້ວຍສະພາແຫ່ງຊາດປັບປຸງມາແລ້ວ 6 ຄັ້ງ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປັບປຸງ 2 ຄັ້ງ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ປັບປຸງ 1 ຄັ້ງ. ການປັບປຸງກົດໝາຍແຕ່ລະຄັ້ງກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ. ແຕ່ການປັບປຸງໄລຍະຜ່ານມາກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການປະເມີນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍບໍ່ທັນເຮັດຢ່າງກວ້າງຂວາງ ມີພຽງແຕ່ຄະນະຮັບຜິດຊອບທີ່ໄດ້ຖືກມອບໝາຍເປັນຜູ້ປັບປຸງແລ້ວກໍນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ. ສະນັ້ນ, ຈຶ່ງເຮັດໃຫ້ມີບາງເນື້ອໃນ ບໍ່ທັນຮັດກຸມຈະແຈ້ງ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນບາງດ້ານບໍ່ທັນມີຄຸນນະພາບເທົ່າທີ່ຄວນ.

ໃນກອງປະຊຸມ, ຄະນະຮັບຜິດຊອບ ໄດ້ຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ. ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດເຫັນຢ່າງຟົດຟື້ນ ຕໍ່ເນື້ອໃນມາດຕາຕ່າງໆຂອງກົດໝາຍ 4 ສະບັບ ດັ່ງກ່າວ ໄປແຕ່ລະໝວດແຕ່ລະມາດຕາ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ




ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາຮັບປະກັນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ເສດຖະກິດຂະ... ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນໄລຍະໃໝ່ ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ສູງຂຶ້ນ.

**(ອານຸສອນ ພູມມີທອນ)**




# ສືບຕໍ່ຍົກສູງຂີດຄວາມສາມາດດ້ານທັກສະໃຫ້ ສສຂ ຢູ່ແຂວງສາລະວັນ



(ສພຊ) ເພື່ອຍົກລະດັບຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແນໃສ່ເຮັດໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ມີປະສິດທິຜົນໃຫ້ ສສຂ ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບທັກສະທີ່ມີຄວາມຈຳເປັນໃນການປະຕິບັດວຽກງານຕົວຈິງ ໃຫ້ມີຜົນສຳເລັດດີຂຶ້ນ, ເພື່ອແລກປ່ຽນ, ສົນທະນາກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ສສຂ ແລະ ພະນັກງານທີ່ເປັນເສນາທິການ ແນໃສ່ການຍົກລະດັບຄວາມຮັບຮູ້ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ການເມືອງ ໃຫ້ມີປະສິດທິຜົນດີ; ທັງຮັບປະກັນໃຫ້ແກ່ການປະຕິບັດພາລະບົດບາດຂອງສະມາຊິກສະພາ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ແລະ ສ້າງຄວາມເຊື່ອໝັ້ນໄວ້ວາງໃຈຂອງປະຊາຊົນ ຕໍ່ສະມາຊິກສະພາໃຫ້ນັບມື້ສູງຂຶ້ນນັ້ນ ໃນວັນທີ 6-7 ສິງຫາ 2023 ທີ່ຫ້ອງປະຊຸມໃຫຍ່ຂອງແຂວງສາລະວັນ ໄດ້ມີກອງປະຊຸມການຍົກສູງຂີດຄວາມສາມາດດ້ານທັກສະການຕິດຕາມກວດກາ, ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ການຊັກຖາມ ແລະ ການປະກອບຄຳເຫັນ, ການລົງພົບປະຜູ້ມີສິດເລືອກຕັ້ງ ໃຫ້ແກ່ ສສຂ; ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ມີຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະມາຊິກສະພາປະຊາຊົນຂັ້ນແຂວງ 3 ແຂວງ ຄື: ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ; ນັກວິທະຍາກອນຮັບເຊີນຈາກສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ສິນທະລາ ຫຼ້າສຸກສະໄໝ ປະທານກອງປະຊຸມ ໄດ້ກ່າວເປີດ ແລະ ມີຄຳເຫັນເນັ້ນໜັກວ່າ: ຄະນະປະຈຳສະພາແຫ່ງຊາດ ເວລາໃດກໍໄດ້ຖືເປັນສຳຄັນວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວິຊາການທີ່ເປັນເສນາທິການໃຫ້ສະພາ ໂດຍມີການແຕ່ງຕັ້ງຄະນະຮັບຜິດຊອບ, ສ້າງແຜນດຳເນີນງານໃນແຕ່ລະໄລຍະ ແລະອະນຸມັດໃຫ້ວຽກງານດັ່ງກ່າວເຄື່ອນໄຫວຢ່າງຕໍ່ເນື່ອງ, ກອງປະຊຸມຄັ້ງນີ້ແມ່ນສືບຕໍ່ຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ແລະ ແຜນການປະຈຳປີ 2023 ຂອງວຽກງານຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສສຂ ເຊິ່ງກອງປະຊຸມນີ້ໄດ້ຈັດຂຶ້ນເປັນຄັ້ງທີ 6 ແລະ ມີ 4 ຫົວຂໍ້. ດັ່ງນັ້ນ, ຈຶ່ງຮຽກຮ້ອງມາຍັງບັນດາທ່ານ ທີ່ເຂົ້າຮ່ວມກອງປະຊຸມຝຶກອົບຮົມຄັ້ງນີ້ ຈົ່ງພ້ອມກັນສຸມສະຕິປັນຍາ ແລະ ນຳໃຊ້ເວລາອັນມີຄຸນຄ່າເຂົ້າໃນການຟັງ, ການສົນທະນາ ແລະແລກປ່ຽນບົດຮຽນນຳກັນໃຫ້ເລິກເຊິ່ງ, ສາມາດນຳເອົາບົດຮຽນໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດພາລະບົດບາດຂອງຕົນໃຫ້ດີຂຶ້ນ.

ກອງປະຊຸມ ໄດ້ຮັບຟັງການສະເໜີກ່ຽວກັບການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ທັກສະການຊັກຖາມ ແລະ ການປະກອບຄຳເຫັນ ສະເໜີໂດຍ ທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສະເໜີໂດຍທ່ານ ປອ. ສາຍທອງພິມ ມະວົງ ຫົວຫນ້າກົມແຜນການ ແລະ ການລົງທຶນ ກຳມາທິການແຜນການ, ການເງິນ ແລະ ການກວດສອບສະພາແຫ່ງຊາດ; ທັກສະການພົບປະປະຊາຊົນຂອງ ສສຂ ສະເໜີໂດຍທ່ານນາງ ບົວວັນ ທຳມະວົງ ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນກັບນັກວິທະຍາກອນຢ່າງກົງໄປກົງມາກ່ຽວກັບຫົວຂໍ້ຕ່າງໆ ທີ່ໄດ້ນຳມາສະເໜີໃນກອງປະຊຸມຄັ້ງນີ້ ເພື່ອສ້າງຂີດຄວາມສາມາດການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານນຳໃຊ້ງົບປະມານຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ ແລະງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

**(ກົງໃຈ ແສງອຳພັນ)**



## ປະທານ ກຕທ...

(ຕໍ່ຈາກໜ້າ 1)

ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ທ່ານ Alec Carnes ແລະ ຄະນະ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມ ແລະ ການພົວພັນຮ່ວມມືອັນຍາວນານ ບົນພື້ນຖານຄູ່ຮ່ວມມືແບບກວມລວມ ລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດໃຫ້ໄດ້ຮັບການພັດທະນາຂຶ້ນ ທັງເປັນໂອກາດໃຫ້ແກ່ການແລກປ່ຽນບົດຮຽນ ແລະ ທັດສະນະອື່ນໆ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

ທ່ານ Alec Carnes ໄດ້ສະແດງຄວາມຂອບໃຈຢ່າງສູງ ຕໍ່ປະທານກຳມາທິການການຕ່າງປະເທດ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າ ໃຫ້ການຕ້ອນຮັບຢ່າງອົບອຸ່ນ ໃນຄັ້ງນີ້ ແລະ ໄດ້ຮັບຟັງສະພາບການພົ້ນເດັ່ນຂອງ ສປປ ລາວ ໃນປັດຈຸບັນ ແລະ ຮັບເອົາບັນດາຂໍ້ສະເໜີຂອງສະພາແຫ່ງຊາດລາວ ແລະ ພ້ອມທີ່ຈະໃຫ້ການຮ່ວມມື ແລະ ຊອກຫາວິທີທາງຕ່າງໆ ຮ່ວມກັນ ເພື່ອເສີມຂະຫຍາຍການພົວພັນ ແລະ ການຮ່ວມມືຂອງສອງປະເທດ ເປັນຕົ້ນການສືບຕໍ່ການຮ່ວມມື ໃນການເກັບກູ້ລະເບີດຍັງບໍ່ທັນແຕກ (UXO), ການຊ່ວຍເຫຼືອດ້ານມະນຸດສະທຳ, ໂຄງການ MIA (ຊອກຄົ້ນສິ່ງເສດເຫຼືອປາງສົງຄາມ) ແລະ ໂຄງການອື່ນໆ ທີ່ມີຕໍ່ ສປປ ລາວ.

ປະທານກຳມາທິການການຕ່າງປະເທດ ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ ສປປ ລາວ ແລະ ສ. ອາເມຣິກາ. ນັບແຕ່ສ້າງຕັ້ງສາຍພົວພັນການທູດນຳກັນ ໃນປີ 1955, ສອງປະເທດ ມີສາຍພົວພັນ ແລະ ການຮ່ວມມືອັນຍາວນານ ແລະ ກໍໄດ້ຮັບການພັດທະນາຂຶ້ນເລື້ອຍໆ ຈົນກ້າວມາເປັນຄູ່ຮ່ວມມືແບບກວມລວມໃນປີ 2016. ໃນໄລຍະຜ່ານມາ, ສອງປະເທດ ໄດ້ແລກປ່ຽນຄະນະຜູ້ແທນ ນັບແຕ່ຂັ້ນສູງສຸດ ຈົນຮອດຂັ້ນວິຊາການນຳກັນ. ນອກນັ້ນ, ສະພາແຫ່ງຊາດລາວ ແລະ ລັດຖະສະພາອາເມຣິກາ ມີການພົວພັນຮ່ວມມືທີ່ດີນຳກັນ ແຕ່ຍັງບໍ່ຕໍ່ເນື່ອງ ເຊິ່ງສະແດງອອກ ມີການແລກປ່ຽນການຢ້ຽມຢາມ ໃນລະດັບກຳມາທິການ ແລະ ວິຊາການ. ພ້ອມກັນນີ້, ປະທານກຳມາທິການການຕ່າງປະເທດ ໄດ້ແຈ້ງສະພາບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດລາວ ຊຸດທີ IX ແລະ ປຶກສາຫາລືທິດທາງ ແຜນການການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດ ໃນຕໍ່ໜ້າ ໂດຍສະເພາະແມ່ນສືບຕໍ່ການແລກປ່ຽນຄະນະຜູ້ແທນ ໃນລະດັບຕ່າງໆ ນຳກັນ, ການແລກປ່ຽນຂໍ້ມູນ-ຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດ, ສືບຕໍ່ສ້າງຊັບພະຍາກອນມະນຸດ ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການສະໜັບສະໜູນ ແລະ ການຊ່ວຍເຫຼືອພາຍໃຕ້ໂຄງການສ້າງຂີດຄວາມສາມາດ ແລະ ປະສິດທິພາບໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຂອງ ສປປ ລາວ (STEPS) ທີ່ພວມຈັດຕັ້ງປະຕິບັດຮ່ວມກັບສະພາແຫ່ງຊາດລາວ.

ສອງຝ່າຍ ເຫັນດີໂດຍພື້ນຖານ ໃນການຊຸກຍູ້ໃຫ້ລັດຖະບານ ຂອງສອງປະເທດ ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງຖະແຫຼງການວ່າດ້ວຍການເປັນຄູ່ຮ່ວມແບບກວມລວມ ທີ່ທັງສອງປະມຸກຂອງສອງປະເທດ ໄດ້ລົງນາມຮ່ວມກັນ ໃນປີ 2016 ໃຫ້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດອັນແທ້ຈິງ ມາສູ່ປະຊາຊົນຂອງສອງປະເທດເປັນຕົ້ນ: ການຮ່ວມມື ໃນການເກັບກູ້ລະເບີດຍັງບໍ່ທັນແຕກ (UXO), ໂຄງການຊ່ວຍເຫຼືອດ້ານມະນຸດສະທຳ, ໂຄງການ MIA (ຊອກຄົ້ນສິ່ງເສດເຫຼືອປາງສົງຄາມ) ແລະ ໂຄງການອື່ນໆ ທີ່ມີຕໍ່ ສປປລາວ; ຊຸກຍູ້ການຮ່ວມມືດ້ານການຄ້າ ແລະ ການລົງທຶນລະຫວ່າງສອງປະເທດ ໂດຍການໃຫ້ມີການແລກປ່ຽນການຢ້ຽມຢາມເຮັດວຽກ ລະຫວ່າງພາກທຸລະກິດ ຂອງທັງສອງປະເທດ ເພື່ອແລກປ່ຽນຂໍ້ມູນ, ທ່າແຮງ ແລະ ກາລະໂອກາດຮ່ວມມືນຳກັນໃຫ້ຫຼາຍຂຶ້ນກວ່າເກົ່າ; ພິຈາລະນາອະນຸມັດການມອບສິດທິພິເສດດ້ານການຄ້າ (Generalized System of Preferences-GSP) ໃຫ້ແກ່ ສປປ ລາວ ເພື່ອສິ່ງເສີມໃຫ້ສິນຄ້າຂອງ ສປປ ລາວ ໄປສູ່ຕະຫຼາດອາເມລິກາ ໃນອັດຕາພາສີຕໍ່າ. ພ້ອມນີ້ ກໍໄດ້ສະເໜີລັດຖະສະພາອາເມຣິກາ ສືບຕໍ່ຊຸກຍູ້ລັດຖະບານ ຊ່ວຍພິຈາລະນາສະໜັບສະໜູນງົບປະມານໃນວຽກງານການເກັບກູ້ລະເບີດບໍ່ທັນແຕກ ແລະ ຫຼົງເຫຼືອໃນສະໄໝສົງຄາມປິດລັບ ຫຼື ສົງຄາມໃນປະເທດອິນດູຈີນ ຢູ່ລາວ.

ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ, ສອງຝ່າຍເຫັນດີສືບຕໍ່ພົວພັນຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ໂດຍສະເພາະການກະກຽມເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຫຼື AIPA-45 ໃນປີ 2024.

ໃນຕອນທ້າຍ, ປະທານກຳມາທິການການຕ່າງປະເທດ ໄດ້ສະແດງຄວາມຂອບໃຈ ຕໍ່ລັດຖະບານ, ລັດຖະສະພາ ກໍຄືປະຊາຊົນອາເມຣິກາ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນແກ່ ສປປ ລາວ ມາໂດຍຕະຫຼອດ. ສຳລັບສະພາແຫ່ງຊາດລາວ ກໍໄດ້ຮັບການສະໜັບສະໜູນ ແລະ ການຊ່ວຍເຫຼືອຈາກມູນນິທິເອເຊຍ, ໂຄງການສ້າງຂີດຄວາມສາມາດ ແລະ ປະສິດທິພາບໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຂອງ ສປປ ລາວ (STEPS) ທີ່ຜ່ານ UNDP ແລະ ຫວັງຢ່າງຍິ່ງວ່າ ສປປລາວ ຈະສືບຕໍ່ໄດ້ຮັບການສະໜັບສະໜູນຈາກສະຫະລັດອາເມຣິກາ ໃນຕໍ່ໜ້າ.

## ຍົກສູງ...

(ຕໍ່ຈາກໜ້າ 1)

ສະພາປະຊາຊົນຂັ້ນແຂວງ 3 ແຂວງພາກເໜືອ; ນັກວິທະຍາກອນຮັບເຊີນຈາກສະພາແຫ່ງຊາດ, ຄະນະພະແນກ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

ທັງນີ້, ກໍເພື່ອຍົກລະດັບຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແນໃສ່ເຮັດໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນ ທັງເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຮູ້, ຄວາມເຂົ້າໃຈ ກ່ຽວກັບບາງທັກສະທີ່ມີຄວາມຈຳເປັນໃນການປະຕິບັດວຽກງານຕົວຈິງໃຫ້ມີຜົນສຳເລັດດີຂຶ້ນ, ເພື່ອແລກປ່ຽນ, ສົນທະນາກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການດ້ວຍກັນ ແນໃສ່ການຍົກລະດັບຄວາມຮັບຮູ້ ແລະ ຄວາມສາມາດໃນການ ປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິຜົນດີ.

ກອງປະຊຸມ ໄດ້ຮັບຟັງການສະເໜີຫົວຂໍ້ທັກສະການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ສະເໜີໂດຍ ທ່ານ ປອ. ສາຍທອງພິມມະວົງ ຫົວໜ້າກົມແຜນການ ແລະ ການລົງທຶນ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ; ທັກສະການພົບປະປະຊາຊົນ ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ການຕິດຕາມກວດກາບັນດາມະຕິ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ທັກສະການຊັກຖາມ, ການປະກອບຄຳເຫັນ ສະເໜີໂດຍທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນກັບນັກວິທະຍາກອນຢ່າງກົງໄປກົງມາ.

ໃນພິທີ, ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ກ່າວເປີດກອງປະຊຸມວ່າ: ຄະນະປະຈຳສະພາແຫ່ງຊາດ ກໍຄືຄະນະຊີ້ນຳລວມການຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສສຂ ແລະ ພະນັກງານເສນາທິການ ເວລາໃດກໍເຫັນໄດ້ຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາ ຕໍ່ກັບວຽກງານຍົກສູງຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການ ເພື່ອຮັບໃຊ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຢ່າງຕໍ່ເນື່ອງ; ການຝຶກອົບຮົມຍົກສູງຂີດຄວາມສາມາດໃນຄັ້ງນີ້ ເປັນການສືບຕໍ່ຈັດຕັ້ງປະຕິບັດແຜນການການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຂອບເຂດທົ່ວປະເທດ ເຊິ່ງເປັນການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ຂອງຄະນະຊີ້ນຳລວມການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. ໃນກອງປະຊຸມຝຶກອົບຮົມຄັ້ງນີ້ ບັນດາທ່ານ ສສຂ ທີ່ມາຈາກຫຼາຍຂົງເຂດວຽກງານ ແລະ ສາຂາອາຊີບທີ່ແຕກຕ່າງກັນນັ້ນ ຈະມີໂອກາດຄົ້ນຄວ້າ, ລົງເລິກ, ກຳແໜ້ນ ແລະ ແລກປ່ຽນບົດຮຽນ ບັນຫາທີ່ຈຳເປັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ກໍຄືຂອງສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ທັງເປັນການສ້າງເງື່ອນໄຂໃຫ້ສະມາຊິກສະພາ ໄດ້ພົບປະແລກປ່ຽນບົດຮຽນ ເຊິ່ງກັນແລະກັນ ເພີ່ມຕື່ມ ເຊິ່ງບົດຮຽນທີ່ນຳມາສະເໜີໃນຄັ້ງນີ້ ບັນດາທ່ານຈຳນວນໜຶ່ງອາດຈະເຄີຍຮຽນຮູ້ ຫຼື ໄດ້ຜ່ານໃນພາກປະຕິບັດຕົວຈິງມາແລ້ວ ແລະ ສຳລັບບັນດາທ່ານຈຳນວນໜຶ່ງແມ່ນເປັນບົດຮຽນໃໝ່, ຈຶ່ງຖືເປັນໂອກາດສຳລັບການຮຽນຮູ້ ທັງເປັນການລື້ມຄືນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃຫ້ກຳໄດ້ບົດຮຽນເລິກເຊິ່ງຂຶ້ນກວ່າເກົ່າ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດປະໂຫຍດສູງສຸດໃນໜ້າທີ່ການເມືອງຂອງຕົນ.

**(ສຸພາວັນ ທອມສະນິດ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ເຂົ້າຮ່ວມຮັບຟັງ.

ໂອກາດດັ່ງກ່າວ, ທ່ານ ແຂກ ພົງພັນ ນາຍບ້ານຜາລຽບ ໄດ້ກ່າວສະແດງຄວາມຕ້ອນຮັບ ແລະ ລາຍງານສະພາບການຂອງບ້ານໂດຍສັງເຂບວ່າ: ບ້ານຜາລຽບ ແມ່ນບ້ານໜຶ່ງທີ່ຕັ້ງຢູ່ 3 ບ້ານແຄມຂອງເຂດບ້ານພັດທະນາເມືອງປາ-ຜາລຽບ, ຂຶ້ນກັບເມືອງປາກລາຍ ແຂວງໄຊຍະບູລີ ເຊິ່ງປະກອບມີ 140 ຄອບຄົວ, ມີ 12 ໜ່ວຍ, ມີພົນລະເມືອງທັງໝົດ 816 ຄົນ, ຍິງ 438 ຄົນ, ເຜົ່າລາວ 770 ຄົນ, ຍິງ 407 ຄົນ ແລະ ເຜົ່າກຶມມຸ 46 ຄົນ; ມີແຮງງານຕົ້ນຕໍທັງໝົດ 372 ຄົນ, ຍິງ 175 ຄົນ, ແຮງງານສຳຮອງ 48 ຄົນ, ຍິງ 25 ຄົນ, ດ້ານວຽກງານແນວຄິດ ແມ່ນມີແນວຄິດອຸ່ນອຽນ ທຸ່ນທ່ຽງ ເຊື່ອໝັ້ນການນຳພາຂອງພັກ-ລັດ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ດ້ານເສດຖະກິດອາຊີບຫຼັກແມ່ນປູກຝັງລ້ຽງສັດ ເຊິ່ງມີເນື້ອທີ່ການຜະລິດທັງໝົດ 296,60 ເຮັກຕາ, ເນື້ອທີ່ນາ 96,60 ເຮັກຕາ, ປູກມັນຕົ້ນ 180 ເຮັກຕາ, ປູກຫຍ້າລ້ຽງສັດ 30 ເຮັກຕາ ແລະ ດ້ານວັດທະນະທຳ-ສັງຄົມ; ວຽກງານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ພ້ອມທັງສະເໜີຕ່າງໆ ເປັນຕົ້ນແມ່ນສະເໜີໃຫ້ສະພາປະຊາຊົນແຂວງ ແລະ ສະພາແຫ່ງຊາດ ຄົ້ນຄວ້າພິຈາລະນາເລື່ອງການທົດແທນຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້າແມ່ນ້ຳຂອງເມືອງປາກລາຍ ແຂວງໄຊຍະບູລີ ໃຫ້ມີຄວາມເໝາະສົມ ແລະ ໃຫ້ເກັບກຳຂໍ້ມູນຄືນ; ໃຫ້ພິຈາລະນາແກ້ໄຂສ້ອມແປງເສັ້ນທາງລະຫວ່າງບ້ານເມືອງປາຫາບ້ານຜາລຽບ ແລະ ການປະຕິບັດໂຄງການສ້ອມແປງເສັ້ນທາງຫາດດ້າຍ ຫາເມືອງປາ ເຫັນວ່າຍັງຊັກຊ້າ ແລະ ສະເໜີໃຫ້ກວດກາໂຄງການຊົນລະປະທານຜາລຽບ ຍັງໃຊ້ການບໍ່ໄດ້ ແລະ ບັນຫາສິນຄ້າລາຄາແພງ.

ຈາກນັ້ນ, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງກ່ອນອື່ນ ທ່ານໄດ້ຍ້ອງຍໍຊົມເຊີຍຜົນສຳເລັດຂອງການຊີ້ນຳນຳພາຂອງໜ່ວຍພັກບ້ານຜາລຽບ ແລະ ຜົນງານຂອງບ້ານທີ່ຍາດມາໄດ້ ແລະ ເຈາະຈີ້ມເຖິງບັນຫາດ້ານສາທາລະນະສຸກ, ດ້ານກອງທຶນປະກັນສັງຄົມ, ການສຶກສາ ແລະ ແຮງງານ ມີຂໍ້ສະດວກຫຍຸ້ງຍາກຄືແນວໃດ ຈາກນັ້ນ, ທ່ານກໍໄດ້ຍົກໃຫ້ເຫັນສະພາບການຂອງໂລກ ແລະ ສະພາບການຫຍຸ້ງຍາກຂອງລາວເຮົາ ພ້ອມທັງສະເໜີໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ຮັກສາມູນເຊື້ອທີ່ຍາດມາໄດ້ໃນທ່າມກາງສະພາບການຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ຜະລິດເອງ ກຸ້ມຕົນເອງ ເປັນເຈົ້າຕົນເອງ; ໃຫ້ເອົາໃຈໃສ່ປຸກລະດົມປູກຝັງຈິດສຳນຶກ ແລະ ສົ່ງເສີມໃຫ້ລູກຫຼານໄດ້ຮ່ຳຮຽນໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ມອບບັນດາຂໍ້ສະເໜີຂອງພໍ່ແມ່ປະຊາຊົນ ໄປໃຫ້ທ່ານເຈົ້າເມືອງປາກລາຍຊີ້ແຈງກັບທີ່.

ໃນຕອນທ້າຍ, ທ່ານ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ມອບເຄື່ອງຊ່ວຍເຫຼືອຈຳນວນໜຶ່ງ ປະກອບມີອຸປະກອນການສຶກສາ,ອຸປະກອນກິລາ ແລະ ເຂົ້າສານອາຫານແຫ້ງ ມອບໃຫ້ຄອບຄົວທຸກຍາກພາຍໃນບ້ານຜາລຽບ.

**(ສອນສັກ ວັນວິໄຊ)**

# ຄະນະ ສສຊ ເຂດ 14 ສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນສິງຫາ



(ສພຊ) ໃນຕອນເຊົ້າຂອງວັນທີ 29 ສິງຫາ 2023 ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈຳເດືອນສິງຫາ 2023 ແລະ ວາງແຜນສືບຕໍ່ປະຈຳເດືອນກັນຍາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນພາຍໃຕ້ການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ມີບັນດາທ່ານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 14, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງການເຂົ້າຮ່ວມ.

ທ່ານ ຈັນທະຄາດ ສີສຸພັນ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ປະຈຳເດືອນທີ 8/2023 ໃຫ້ຮູ້ວ່າ: ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໄດ້ເອົາໃຈໃສ່ເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍປະສານສົມທົບກັບສະພາປະຊາຊົນແຂວງໃນໄລຍະ 1 ເດືອນຜ່ານມາເຊິ່ງໄດ້ມີຜົນສຳເລັດສາມາດສັງລວມໄດ້ ເປັນຕົ້ນແມ່ນດ້ານນິຕິບັນຍັດ ແລະ ດ້ານນິຕິກຳ: ປະສານສົມທົບກັບສະພາປະຊາຊົນແຂວງ ນຳຮ່າງນິຕິກຳໃຕ້ກົດໝາຍຕາມການສະເໜີຂອງອົງການປົກຄອງແຂວງຈຳນວນ 2 ສະບັບ ເຂົ້າຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ສພຂ ຊຸດທີ II ຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດຢູ່ແຂວງສາລະວັນ (ສ້າງໃໝ່), ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳດື່ມ ແລະ ນ້ຳກ້ອນທີ່ຜະລິດຈາກໂຮງງານພາຍໃນແຂວງສາລະວັນ (ປັບປຸງ); ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງແຂວງ ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ສະໂມສອນໃຫຍ່ຂອງແຂວງ; ດ້ານການຕິດຕາມກວດກາ: ຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ 8 ເມືອງທົ່ວແຂວງ; ນອກນີ້, ຍັງມີການເຄື່ອນໄຫວວຽກງານຈຳນວນໜຶ່ງຂອງ ສສຊ ປະຈຳເຂດເລືອກຕັ້ງທີ 14 ປະຈຳຢູ່ສູນກາງຕື່ມອີກ.

**(ນາງ ມີດາວັນ ແສງບົວລະພາ ແລະ ດີລຳພົນ ພົມມະຈັນ)**



# ຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານຂອງເປົ້າໝາຍຜູ້ຖືກປະເມີນຄວາມໄວ້ວາງໃຈ



(ສພຊ) ສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດກອງປະຊຸມການຄົ້ນຄວ້າປະກອບຄຳເຫັນຕໍ່ບົດລາຍງານຂອງເປົ້າໝາຍຜູ້ຖືກປະເມີນຄວາມໄວ້ວາງໃຈ ທີ່ສະພາປະຊາຊົນແຂວງ ໄດ້ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໃນຕອນເຊົ້າຂອງວັນທີ 29 ສິງຫາ 2023 ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ປະທານສະພາປະຊາຊົນແຂວງໄຊສົມບູນ, ມີຮອງປະທານສະພາ, ສະມາຊິກສະພາປະຊາຊົນແຂວງ ປະຈຳ 5 ເມືອງ ຕະຫຼອດຮອດກຳມະການຄະນະປະຈຳ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມໄດ້ຮັບຟັງການຜ່ານມະຕິສະບັບເລກທີ 40/ຄປສຂ.ຊບ ຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ, ມະຕິວ່າດ້ວຍການແຕ່ງຕັ້ງຄະນະປະຈຳຮັບຜິດຊອບການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງຈາກທ່ານ ສົມດີ ຈັນທະວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ. ຈາກນັ້ນ, ທ່ານ ນາງ ຂັນກາບ ໄຊຍະກຸມມານ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ, ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຂໍ້ຕົກລົງຂອງຄະຮັບຜິດຊອບການປະເມີນຄວາມໄວ້ວາງໃຈດ້ວຍການແບ່ງໜ່ວຍຄົ້ນຄວ້າບົດລາຍງານຂອງບຸກຄະລາກອນທີ່ຖືກປະເມີນຄວາມໄວ້ວາງໃຈ.

ທັງນີ້, ກໍເພື່ອເປັນບ່ອນອີງໃຫ້ແກ່ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງໃນການໃຫ້ຄະແນນການປະເມີນຄວາມໄວ້ວາງໃຈ ຕໍ່ການປະຕິບັດຫນ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໄດ້ດຳເນີນໄປຢ່າງຖືກຕ້ອງຕາມຫຼັກການ, ຂັ້ນຕອນໃຫ້ສອດຄ່ອງຕາມການຈັດປະເພດ ການຈັດໃຫ້ຄະແນນປະເມີນຜົນ ແນໃສ່ຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງວຽກງານດັ່ງກ່າວ ທັງເປັນການເສີມຂະຫຍາຍພາລະບົດບາດ, ຄວາມຮັບຜິດຊອບໃນການຕິດຕາມກວດກາຂອງສະພາປະຊາຊົນແຂວງ ແລະ ສະມາຊິກສະພາປະຊາຊົນແຂວງຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນດັ່ງກ່າວ ເພື່ອຊອກໃຫ້ເຫັນຈຸດດີ, ຂໍ້ຄົງຄ້າງໃນໄລຍະຜ່ານມາ ພ້ອມທັງມີມາດຕະການປັບປຸງແກ້ໄຂຕົນເອງ ໃນຕໍ່ໜ້າ.

ໃນໂອກາດມີຄຳເຫັນຕໍ່ກອງປະຊຸມ, ທ່ານ ແດງ ປະທຸມທອງ ໄດ້ເນັ້ນໜັກໃຫ້ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແລະ ສະມາຊິກສະພາປະຊາຊົນແຂວງຈົ່ງຕີລາຄາ ແລະ ກໍາໄດ້ສະພາບຄວາມເປັນຈິງຢ່າງພາວະວິໄສ, ເອົາໃຈໃສ່ເບິ່ງມາດຖານເງື່ອນໄຂທີ່ກຳນົດໃນການປະເມີນໃຫ້ຮອບດ້ານ ໂດຍສະເພາະຄວາມເຊື່ອໝັ້ນຕໍ່ພັກ-ລັດ, ອຸດົມການສັງຄົມນິຍົມ, ນ້ຳໃຈເສຍສະຫຼະເພື່ອຊາດ-ເພື່ອປະຊາຊົນ ແລະ ຄວາມຮັບຜິດຊອບທາງດ້ານການເມືອງທີ່ຈະແຈ້ງ ຫຼີກເວັ້ນການໃຫ້ຄະແນນໂດຍໃຊ້ແນວຄິດອະຄະຕິ, ມີຄວາມຍຸຕິທຳ, ກົງໄປກົງມາ ບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວ ໂດຍໃຫ້ຍຶດຖືຜົນປະໂຫຍດຂອງສ່ວນລວມ ແລະ ຂອງປະຊາຊົນເປັນຫຼັກ ເພື່ອໃຫ້ການປະເມີນບຸກຄະລາກອນໃນຄັ້ງນີ້ ໄດ້ດຳເນີນໄປຢ່າງມີປະສິດທິພາບ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ.

**(ແສງຕາວັນ ລັດຕະນະວົງ)**

# ສສຊ ເຂດເລືອກຕັ້ງເມືອງນາໝໍ້ ພົບປະ ຜູ້ມີສິດເລືອກຕັ້ງ



(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສພຂ) ແລະ ເພື່ອເປັນການໂຄສະນາ, ຜັນຂະຫຍາຍເນື້ອໃນສຳຄັນຕ່າງໆ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II, ລະຫວ່າງວັນທີ 29-31 ສິງຫາ ຜ່ານມາ, ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ບົວພອນ ແກ້ວມະນີ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນາໝໍ້ ໄດ້ພົບປະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ທີ່ເມືອງນາໝໍ້ ແຂວງອຸດົມໄຊ.

ການເຜີຍແຜ່ໃນຄັ້ງນີ້ ລວມທັງໝົດໄດ້ 6 ຈຸດຄື: ບ້ານໂຮມໄຊ, ບ້ານຫ້ວຍອອນ, ບ້ານນາໝໍ້ໃຕ້, ບ້ານນ້ຳວິນເໜືອ, ບ້ານນາທົ່ງ ແລະ ຫ້ອງວ່າການເມືອງນາໝໍ້ ມີຈຳນວນພົນລະເມືອງຜູ້ມີສິດເລືອກຕັ້ງ ເຂົ້າຮ່ວມທັງໝົດ 474 ຄົນ, ຍິງ 174 ຄົນ ເຊິ່ງໃນແຕ່ລະຈຸດໄດ້ຮັບຟັງການລາຍງານສະພາບພົ້ນເດັ່ນໂດຍຫຍໍ້ຈາກອົງການປົກຄອງບ້ານ ແລະ ເມືອງ. ພ້ອມນັ້ນ, ທ່ານ ຮອງປະທານສະພາປະຊາຊົນແຂວງ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງໄດ້ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງໄດ້ປະກອບຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ ບັນຫາທີ່ພໍ່ແມ່ປະຊາຊົນສົນໃຈ ແລະ ການສະເໜີສ່ວນຫຼາຍແມ່ນບັນຫາການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ (ວຽກງານພື້ນຖານໂຄງລ່າງ), ເສັ້ນທາງທາງລົດ, ເສັ້ນທາງໄປຫາເຂດທຳການຜະລິດ, ການປູກ-ການລ້ຽງ, ບັນຫາຜົນກະທົບ-ການຊົດເຊີຍຕໍ່ກັບການລົງທຶນຂອງຕ່າງປະເທດ, ປາກົດການຫຍໍ້ທໍ້ຕ່າງໆ, ວຽກງານສາທາລະນະສຸກ, ການຄຸ້ມຄອງລາຄາສິນຄ້າຕ່າງໆ ແລະ ການສຶກສາ. ຈາກນັ້ນ, ສະມາຊິກສະພາປະຊາຊົນແຂວງ ກໍໄດ້ອະທິບາຍ ແລະ ຊີ້ແຈງບາງບັນຫາທີ່ຜູ້ມີສິດເລືອກຕັ້ງສະເໜີ ພ້ອມທັງຮອບຮອມບັນດາຄຳສະເໜີເຫຼົ່ານັ້ນ ເພື່ອຈະນຳເຂົ້າກອງປະຊຸມຂອງຄະນະປະຈຳສະພາປະຊາຊົນແຂວງຄົ້ນຄວ້າ, ປຶກສາຫາລືບັນຫາດັ່ງກ່າວ ແລ້ວມອບໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ທັນກັບເວລາ.

ໂອກາດດັ່ງກ່າວ, ທ່ານ ຄຳເຜີຍ ງອນວັນຄຳ ໃນນາມຫົວໜ້າຄະນະເຄື່ອນໄຫວໃນຄັ້ງນີ້ ໄດ້ສະແດງຄວາມຊົມເຊີຍຕໍ່ອົງການປົກຄອງບ້ານ ແລະ ເມືອງ ຕໍ່ກັບການຈັດຕັ້ງປະຕິບັດໜ້າທີ່, ພ້ອມກັນສຸມໃສ່ເຫື່ອແຮງປະກອບສ່ວນເຂົ້າໃນການພັດທະນາບ້ານ,ພັດທະນາທ້ອງຖິ່ນຂອງຕົນ ເຮັດໃຫ້ບ້ານມີຄວາມສະຫງົບໂດຍພື້ນຖານ ປະຊາຊົນພາຍໃນບ້ານມີຊີວິດການເປັນຢູ່ດີຂຶ້ນເທື່ອລະກ້າວ; ພ້ອມດຽວກັນນັ້ນ, ທ່ານ ຍັງໄດ້ໃຫ້ທິດຊີ້ນຳ, ໂອ້ລົມ ໃຫ້ແກ່ອົງການປົກຄອງບ້ານ ແລະ ເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນ ຈົ່ງພ້ອມກັນເພີ່ມທະວີຄວາມສາມັກຄີ ໃຫ້ເປັນຈິດໜຶ່ງໃຈດຽວ, ພ້ອມກັນຕ້ານບັນຫາປາກົດການຫຍໍ້ທໍ້ຕ່າງໆ, ການເຝົ້າລະວັງການລະບາດຂອງພະຍາດຕ່າງໆ ເຊັ່ນ: ພະຍາດໄຂ້ຍຸງ ແລະ ພະຍາດອື່ນໆ, ເສີມຂະຫຍາຍຮີດຄອງປະເພນີອັນດີງາມ, ສ້າງເສດຖະກິດໃນຄອບຄົວຂອງຕົນໃຫ້ເຂັ້ມແຂງ, ການປູກ-ການລ້ຽງໃຫ້ເປັນສິນຄ້າ ເພື່ອເຮັດໃຫ້ຊີວິດການເປັນຢູ່ໃຫ້ນັບມື້ດີຂຶ້ນໄປເລື້ອຍໆ.

**(ສີແຫວງ ສີບຸນເຮືອງ)**

# ຍົກສູງຂີດຄວາມສາມາດດ້ານວຽກງານກວດສອບໃຫ້ແກ່ ສສຂ ແລະ ພະນັກງານວິຊາການ

(ສພຊ) ເພື່ອເປັນການຍົກສູງການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ກຳໄດ້ວຽກງານການກວດສອບ ຮັບປະກັນໃຫ້ການຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ, ສະພາປະຊາຊົນແຂວງແມ່ນອົງການອຳນາດລັດຂັ້ນທ້ອງຖິ່ນທີ່ປະຕິບັດຕາມ 3 ພາລະບົດບາດຕົ້ນຕໍຄື: ດ້ານນິຕິບັນຍັດ ແມ່ນສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ດ້ານການຕົກລົງບັນຫາພື້ນຖານສຳຄັນຂອງແຂວງ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ດ້ານການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມພາຍໃນແຂວງ ໃນນັ້ນ, ວຽກງານກວດສອບ ກໍເປັນວຽກງານໜຶ່ງທີ່ສຳຄັນ ເຊິ່ງສະພາປະ



ຊາຊົນແຂວງ ໃນຊຸດທີ I ແລະ ຊຸດທີ II ທີ່ເຄື່ອນໄຫວຕິດຕາມກວດກາ ແລະ ພິຈາລະນາເນື້ອໃນດັ່ງກ່າວໃນກອງປະຊຸມ, ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງກໍຍັງເຫັນວ່າ, ການເຄື່ອນໄຫວວຽກງານກວດສອບນີ້ຍັງບໍ່ທັນເຂັ້ມແຂງ ແລະ ຮັບຮູ້ຢ່າງເລິກເຊິ່ງເທົ່າທີ່ຄວນ.

ໃນລະຫວ່າງວັນທີ 30-31 ສິງຫາ 2023 ຢູ່ທີ່ສະໂມສອນຫ້ອງວ່າການເມືອງເຊໂປນ ແຂວງສະຫວັນນະເຂດ, ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງ ແລະ ຍົກລະດັບຄວາມຮູ້ຄວາມເຂົ້າໃຈກ່ຽວກັບການຈັດຕັ້ງປະຕິບັດວຽກງານການກວດສອບ ແລະ ການຕິດຕາມກວດກາຂອງສະພາຕໍ່ການເຄື່ອນໄຫວວຽກງານການກວດສອບໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ; ເຂົ້າຮ່ວມ ແລະ ເປັນວິທະຍາກອນໂດຍທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ, ທ່ານ ສັກດາ ໄພສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມວຽກງານກວດສອບຂອງອົງການກວດສອບແຫ່ງລັດ, ມີທ່ານ ວົງສະຫວັນ ວຽງມະນີ ກຳມະການພັກແຂວງ ເລຂາພັກເມືອງ ເຈົ້າເມືອງເຊໂປນ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ II, ຄະນະຄູຝຶກ ພ້ອມດ້ວຍພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ການຝຶກອົບຮົມຄັ້ງນີ້, ກໍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ເສນາທິການຊ່ວຍວຽກຂອງສະພາປະຊາຊົນແຂວງສະຫວັນນະເຂດ ໃນການຍົກລະດັບຄວາມຮູ້, ຄວາມເຂົ້າໃຈວຽກງານກວດສອບໃຫ້ເຂົ້າໃຈເລິກເຊິ່ງ ຈຶ່ງສາມາດກວດສອບໄດ້ຢ່າງມີປະສິດທິພາບ ເພື່ອຈະໝູນໃຊ້ບົດຮຽນ ແລະ ພຶດຕິກຳຕົວຈິງໃນສັງຄົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນສາມພາລະບົດບາດຕົ້ນຕໍຂອງສະພາປະຊາຊົນແຂວງ ທີ່ໄດ້ກຳນົດໄວ້.

ໃນກອງປະຊຸມແມ່ນໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນເອກະສານຈາກວິທະຍາກອນທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການຕົວຈິງຈາກສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ຝຶກອົບຮົມວຽກງານກວດສອບຂອງອົງການກວດສອບແຫ່ງລັດ ໃນ 4 ຫົວຂໍ້ ປະກອບມີ: ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, ຂັ້ນຕອນການກວດສອບແຫ່ງລັດ, ການກວດສອບລະບົບຄວບຄຸມພາຍໃນ, ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານຂອງອົງການກວດສອບ; ພ້ອມນັ້ນ, ຜູ້ແທນທີ່ເຂົ້າຮ່ວມໄດ້ຄົ້ນຄ້ວາ, ສົນທະນາລົງເລິກໃນແຕ່ລະບັນຫາທີ່ຕິດພັນກັບແຕ່ລະຫົວຂໍ້ທີ່ນຳສະເໜີ ເຮັດໃຫ້ແຜນການຈັດຝຶກອົບຮົມໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມຝຶກອົບຮົມໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກ ມູນນິທິເອເຊຍ (The Asia Foundation) ພາຍໃຕ້ຄູ່ຮ່ວມງານຂອງສະພາແຫ່ງຊາດ.

**(ວັນນະສຸກ ອິນສີຊຽງໃໝ່)**



# ອັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອັດຕະປື



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 1 ກັນຍາ 2023 ພາຍຫຼັງທີ່ໄດ້ດຳເນີນມາເປັນເວລາ 3 ວັນເຕັມ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື, ເຂົ້າຮ່ວມມີທ່ານ ເລັດ ໄຊຍະພອນ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ, ເຈົ້າແຂວງອັດຕະປື, ມີບັນດາທ່ານການນຳແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ບັນດາການພະແນກການ, ອົງການທຽບເທົ່າ, ອົງການຈັດຕັ້ງແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆເຂົ້າຮ່ວມ 100 ກວ່າທ່ານ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ກ່າວມີຄຳເຫັນອັດກອງປະຊຸມວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ເຕັມໄປດ້ວຍບັນຍາກາດທີ່ສ້າງສັນ ແລະ ມີຄວາມເປັນເອກະພາບສູງຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ ໃນການຄົ້ນຄວ້າ, ປະກອບຄຳຄິດ, ຄຳເຫັນຢ່າງກົງໄປກົງມາ ຕໍ່ບັນດາເນື້ອໃນ ທີ່ນຳມາພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້, ເພື່ອຮ່ວມກັນແກ້ໄຂບັນຫາຄວາມຫຍຸ້ງຍາກທີ່ແຂວງຂອງພວກເຮົາກຳລັງປະເຊີນຢູ່ໃນປັດຈຸບັນ, ມາຮອດນີ້ກອງປະຊຸມຂອງພວກເຮົາໄດ້ສຳເລັດຜົນຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໄລຍະກາງສະໄໝ ຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ ແລະ ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ, ທິດທາງແຜນການ 6 ເດືອນທ້າຍປີ 2023; ພິຈາລະນ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບວຽກງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງທ້າຍສະໄໝ ແລະ ວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ ຈຳນວນ 1 ສະບັບ ຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການປະເມີນຄທີ່ດິນໃນທົ່ວແຂວງ; ກອງປະຊຸມ ໄດ້ປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ, ຮັບຟັງການຊີ້ແຈງຈາກບັນດາຂະແໜງການທີ່ກ່ຽວຂ້ອງຕໍ່ກັບຂໍ້ຊັກຖາມຂອງຄະນະປະຈຳສະພາປະຊາຊົນແຂວງຕັ້ງຂຶ້ນ ແລະ ຕໍ່ການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.

ຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງນີ້ ແມ່ນໝາກຜົນລວມຍອດແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່, ການຍົກສູງຄວາມຮັບຜິດຊອບທາງດ້ານການເມືອງຂອງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ, ພະແນກການ-ອົງການທີ່ກ່ຽວຂ້ອງ ທີ່ພ້ອມກັນສຸມສະຕິປັນຍາເຊີດຊູຄວາມຮັບຜິດຊອບໃນການຄົ້ນຄວ້າ ແລະ ນຳສະເໜີຜ່ານກອງປະຊຸມຄັ້ງນີ້, ການປະກອບຄຳຄິດຄຳເຫັນ ຕໍ່ບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ມີລັກສະນະສ້າງສັນ, ມີເຫດຜົນ, ມີເນື້ອໃນເລິກເຊິ່ງ.

**(ວິນັດ)**



# ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງລອງ ແລະ ເມືອງຫຼວງນໍ້າທາ

(ສພຊ) ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນໍ້າທາ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຫຼວງນໍ້າທາ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ II ເຊິ່ງໃນລະຫວ່າງວັນທີ 30 ສິງຫາ-1 ກັນຍາ 2023 ທ່ານ ຄຳຟອງ ອິນມານີ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ, ປະທານສະພາປະຊາຊົນແຂວງຫຼວງນໍ້າທາ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງລອງ ໄດ້ເຄື່ອນໄຫວໄດ້ທັງໝົດ 4 ຈຸດ ຄື: ບ້ານໜອງຄຳ, ບ້ານປ່າຄາ, ບ້ານດອນແຍງ ແລະ ສະໂມສອນເມືອງລອງ; ເຂົ້າຮ່ວມຮັບຟັງມີບັນທ່ານຄະນະນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອະດີດການນຳຂອງເມືອງ, ອະດີດພະນັກງານປະຕິວັດອາວຸໂສ, ບຳນານ, ພະນັກງານ-ລັດຖະກອນອ້ອມຂ້າງແຂວງ, ຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານ ແລະ ປະຊາຊົນທັງໝົດ 690 ຄົນ ຍິງ 197 ຄົນ.



ໃນລະຫວ່າງວັນທີ 24-28 ສິງຫາ 2023 ທ່ານ ຈັນທະສຸລິນ ໝັ້ນປະດິດ ສສຊ ປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ນາງ ເກສອນ ແສງຍະວົງ ສສຊ ປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍ ສສຂ ປະຈຳເມືອງຫຼວງນໍ້າທາ ໄດ້ເຄື່ອນໄຫວໄດ້ທັງໝົດ 11 ຈຸດຄື ບ້ານຫຼັກຄຳໃໝ່, ບ້ານດອນໄຊ, ບ້ານຫຼວງ, ບ້ານຂົວສູງ, ບ້ານທ່າແສ, ບ້ານໂຮງເລື່ອຍ, ບ້ານໂພນໄຊສະຫວ່າງ, ບ້ານນໍ້າທຸງ, ບ້ານທົ່ງນາ, ບ້ານວຽງເງິນ ແລະ ກອງຮ້ອຍ 131; ເຂົ້າຮ່ວມຮັບຟັງມີບັນດາທ່ານພະນັກງານບຳນານ, ອົງການຈັດຕັ້ງບ້ານ, ຄະນະພັກຮາກຖານກຸ່ມບ້ານ ແລະ ປະຊາຊົນທັງໝົດ 669 ຄົນ ຍິງ 328 ຄົນ.

ໂອກາດດັ່ງກ່າວ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ໄດ້ດຳເນີນມາເປັນເວລາ 17 ວັນ ແຕ່ວັນທີ 26 ມິຖຸນາ ຫາ ວັນທີ 18 ກໍລະກົດ 2023 ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ ປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານ ສສຊ ຈາກ 18 ເຂດເລືອກຕັ້ງທົ່ວປະເທດເຂົ້າຮ່ວມທັງໝົດ 164 ທ່ານ ຍິງ 36 ທ່ານ, ມີການນຳ-ອະດີດການນຳຂັ້ນສູງຂອງພັກ-ລັດ ສະມາຊິກລັດຖະບານ ແລະ ແຂກຖືກເຊີນເຂົ້າຮ່ວມ ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ເປັນຕົ້ນແມ່ນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2040, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ, ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການປະເມີນ ການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະ 2 ກອງປະຊຸມທີ່ຜ່ານມາ ແລະ ທິດທາງແຜນການ 6 ເດືອນ, ແຕ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບ ຮ່າງກົດໝາຍສ້າງໃໝ່ມີ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍ ວຽກງານສາທາລະນະສຸກ; ຮ່າງກົດໝາຍວ່າດ້ວຍການຈັດຫາງານ; ຮ່າງ ກົດໝາຍວ່າດ້ວຍອາກອນທີ່ດິນ; ຮ່າງກົດໝາຍວ່າດ້ວຍເຍົາວະຊົນລາວ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍທະນາຄານທຸລະກິດ; ກົດໝາຍວ່າດ້ວຍສັດນໍ້າ ແລະ ການປະມົງກົດໝາຍວ່າດ້ວຍສັດປ່າ; ກົດໝາຍວ່າດ້ວຍການພິມຈຳໜ່າຍ; ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ; ກົດໝາຍວ່າດ້ວຍສານທະຫານ.

ພ້ອມນັ້ນ, ສສຂ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ເຊິ່ງໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 2-4 ສິງຫາ 2023 ຢູ່ທີ່ສະໂມສອນຂອງແຂວງ ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ເຂົ້າຮ່ວມທັງໝົດ 25 ທ່ານ ຍິງ 7 ທ່ານ ໂດຍກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນ ເປັນຕົ້ນແມ່ນພິຈາລະນາຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານກາງສະໄໝ (2021-2023), ພິຈາລະນາຮັບຮອງເອົາກອງປະຊຸມບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2023, ພິຈາລະນາຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານກາງສະໄໝ (2021-2023) ແລະ ວຽກງານ 6 ເດືອນຕົ້ນປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ກາງສະໄໝ (2021-2023), ວຽກງານ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ ທ້າຍສະໄໝ (2023-2025), 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ, ພິຈາລະນາຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດໄລຍະກາງສະໄໝຂອງແຜນການ 5 ປີ (2021-2023) ຂອງສະພາປະຊາຊົນແຂວງ ເຊິ່ງເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເປັນຕົ້ນ: ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ແລະ ດ້ານການຕິດຕາມກວດກາ, ກອງປະຊຸມຍັງໄດ້ພິຈາລະນາຮັບຮອງເອົາການປະເມີນບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ເປັນຕົ້ນ: ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ບຸກຄະລາກອນຂອງອົງການປົກຄອງ, ບັນດາທ່ານ ເຈົ້າເມືອງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານສານປະຊາຊົນແຂວງ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ. ພ້ອມກັນນັ້ນ, ຜູ້ມີສິດເລືອກຕັ້ງຍັງໄດ້ສະເໜີຫາສະມາຊິກສະພາປະຊາຊົນແຂວງ ກ່ຽວກັບການພັດທະນາບ້ານ ເປັນຕົ້ນແມ່ນເສັ້ນທາງ, ຂົວ, ການຄຸ້ມຄອງລາຄາສິນຄ້າຢາງພາລາ, ການຈັດສັນທີ່ດິນທຳການຜະລິດ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ອື່ນໆ.

**(ນາງ ອຳພອນ ສີປະເສີດ)**



# ສພຂ ເຊກອງ ຖະແຫຼງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5

(ສພຊ) ພາຍຫຼັງສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ຖະແຫຼງກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ເຊກອງ ຊຸດທີ II ຕໍ່ສື່ມວນຊົນແຂວງເຊກອງວ່າ:



ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ເລີ່ມໄຂຂຶ້ນໃນຕອນເຊົ້າຂອງວັນອັງຄານທີ 22 ສິງຫາ 2023 ແລະ ໄດ້ດຳເນີນມາເຖິງຕອນບ່າຍວັນພະຫັດທີ 24 ສິງຫາ 2023 ຈຶ່ງໄດ້ສຳເລັດຢ່າງສະຫງ່າງາມ ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 3 ວັນເຕັມ ຢູ່ທີ່ສະໂມສອນ ສພຂ ເຊກອງ ພາຍໃຕ້ການເປັນປະທານຂອງທ່ານ ດົງເພັດ ພະຍົມ ປະທານສະພາປະຊາຊົນແຂວງ; ກອງປະຊຸມໄດ້ຕ້ອນຮັບການເຂົ້າຮ່ວມຂອງທ່ານ ເຫຼັກໄຫຼ ສີວິໄລ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງເຊກອງ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານການນຳພັກ-ລັດຂັ້ນສູງຂອງແຂວງ, ອະດີດການນຳຂອງແຂວງ, ອະດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16; ບັນດາຫົວໜ້າພະແນກການ; ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ທະນາຄານ, ພະນັກງານ-ລັດຖະກອນ ແລະ ສື່ມວນຊົນ ເຂົ້າຮ່ວມທັງໝົດ 100 ກວ່າທ່ານ.

ກອງປະຊຸມໄດ້ຮັບຟັງບົດລາຍງານໂດຍສັງເຂບຂອງເຈົ້າແຂວງເຊກອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງທ້ອງຖິ່ນໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ແລະ ກໍໄດ້ຮັບຟັງການລາຍງານ, ການຊີ້ແຈງຈາກພະແນກການ, ອົງການຈຳນວນໜຶ່ງ.

ໃນວາລະການດຳເນີນກອງປະຊຸມແມ່ນເຕັມໄປດ້ວຍບັນຍາກາດແຫ່ງການເສີມຂະຫຍາຍປະຊາທິປະໄຕຂອງສະມາຊິກສະພາປະຊາຊົນແຂວງ ໄດ້ສຸມທຸກສະຕິປັນຍາໃນການຄົ້ນຄວ້າຢ່າງຖີ່ຖ້ວນ ດ້ວຍຄວາມຮັບຜິດຊອບສູງ ປະກອບຄຳເຫັນຢ່າງກົງໄປກົງມາ ຕໍ່ເນື້ອໃນທີ່ນຳມາພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມຢ່າງມີຄວາມເປັນເອກະພາບສູງ ເຊິ່ງໄດ້ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມສະພາປະຊາຊົນແຂວງ ຈຳນວນ 12 ສະບັບ ຄື: ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງ

ອ່ານຕໍ່ໜ້າ 8 ...




# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານວິຈິດສິນ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;
2. ເຜີຍແຜ່, ສຶກສາອົບຮົມ, ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;
3. ຂຶ້ນແຜນບຳລຸງ ແລະ ສ້າງພະນັກງານ-ລັດຖະກອນ ທີ່ເຮັດວຽກງານວິຈິດສິນ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທຳ ແລະ ວິຊາສະເພາະ;
4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;
5. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;
6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຈິດສິນ;
7. ປະສານສົມທົບກັບ ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 ສິດ ແລະ ໜ້າທີ່ຂອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ ແລະ ພັດທະນາວຽກງານວິຈິດສິນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ໝວດທີ 2**
**ການກວດກາວຽກງານວິຈິດສິນ**

**ມາດຕາ 80 ອົງການກວດກາວຽກງານວິຈິດສິນ**

ອົງການກວດກາວຽກງານວິຈິດສິນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານວິຈິດສິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 81 ເນື້ອໃນການກວດກາ**

ການກວດກາວຽກງານວິຈິດສິນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;
2. ການສ້າງ ແລະ ການປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານວິຈິດສິນ ໃນແຕ່ລະໄລຍະ;
3. ລັກສະນະ, ເນື້ອໃນ ຂອງຂໍ້ມູນກ່ຽວກັບວິຈິດສິນທີ່ນຳໄປໂຄສະນາ ເຜີຍແຜ່;
4. ການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ ທີ່ຮັບຜິດຊອບວຽກງານວິຈິດສິນ;
5. ການປະກອບ ແລະ ການນຳໃຊ້ວັດຖຸອຸປະກອນ, ພາຫະນະ ແລະ ງົບປະມານ ໃນການຈັດຕັ້ງປະຕິ ບັດວຽກງານວິຈິດສິນ;
6. ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານວິຈິດສິນ;
7. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 82 ຮູບການການກວດກາ**

ຮູບການການກວດກາວຽກງານວິຈິດສິນ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຂອງອົງການບໍລິຫານ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາຕາມ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຄະນະກວດກາແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານວິຈິດສິນນັ້ນ ໃຫ້ປະຕິບັດຖືກຕ້ອງ ຕາມກົດໝາຍຢ່າງເຂັ້ມງວດ.

**ພາກທີ X**
**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 83 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານວິຈິດສິນ ເປັນຕົ້ນ ການຄຸ້ມຄອງ, ການສົ່ງເສີມ, ການປົກປັກຮັກສາ, ການອະນຸລັກ, ການບູລະນະ ສ້ອມແປງ ແລະ ການປະຕິສັງຂອນ ວິຈິດສິນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 84 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ພາກທີ XI**
**ບົດບັນຍັດສຸດທ້າຍ**

**ມາດຕາ 85 ວັນວິຈິດສິນແຫ່ງຊາດ**

ລັດ ກຳນົດເອົາ ວັນທີ 11 ພະຈິກ ຂອງທຸກປີ ເປັນວັນວິຈິດສິນແຫ່ງຊາດ.

**ມາດຕາ 86 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 87 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ. ໄຊສົມພອນ ພົມວິຫານ**

---

## ສພຂ ເຊກອງ...

(ຕໍ່ຈາກໜ້າ (7)

ອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານຂອງທ້ອງຖິ່ນ ໄລຍະກາງ ສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດ6ເດືອນຕົ້ນປີແລະແຜນການ 6 ເດືອນທ້າຍປີ 2023; ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍຮັບຮອງເອົາບົດລາຍງານຂອງຄະນະປະຈຳ ສພຂ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ; ມະຕິວ່າດ້ວຍຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023.

ພ້ອມນັ້ນ, ຍັງໄດ້ລົງຄະແນນສຽງຮັບຮອງເອົາຮ່າງນິຕິກຳໃຕ້ກົດໝາຍ 2 ສະບັບຄື: ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍຮັບຮອງເອົາບົດລາຍງານຂອງພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງງົບປະມານການປະກອບສ່ວນຈາກຊຸມຊົນເຂົ້າໃນວຽກງານສຶກສາ; ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍຮັບຮອງເອົາບົດລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການທົດແທນຄ່າເສຍຫາຍທີ່ຖືກຜົນກະທົບຈາກໂຄງການພັດທະນາພາຍໃນແຂວງເຊກອງ.

ທ່ານ ນາງ ຄຳໄພວິລະສານ ກ່າວຕື່ມອີກວ່າ: ໃນນາມຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ ຂໍສະແດງຄວາມຂອບໃຈຢ່າງສູງມາຍັງບັນດາທ່ານການນຳພັກ-ລັດຂັ້ນສູງຂອງແຂວງ, ອະດີດການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າເມືອງ, ລັດວິສາຫະກິດ ແລະ ພາກສ່ວນຕ່າງໆ ທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງພ້ອມພຽງ, ຂໍຂອບໃຈພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າທົ່ວແຂວງ ທີ່ຕິດຕາມການດຳເນີນກອງປະຊຸມຄັ້ງນີ້, ສະແດງຄວາມຂອບໃຈຕໍ່ສື່ມວນຊົນແຂວງ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຂ່າວສານກ່ຽວກັບການດຳເນີນກອງປະຊຸມ ໃຫ້ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ, ຂອບໃຈຕໍ່ທຸກພາກສ່ວນທີ່ໄດ້ປະກອບສ່ວນ ເຮັດໃຫ້ກອງປະຊຸມຄັ້ງນີ້ ໄດ້ຮັບຜົນສຳເລັດຕາມຄາດໝາຍ.

ເພື່ອຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຊຸດທີ II ນີ້ ສະມາຊິກສະພາປະຊາຊົນແຂວງເຊກອງ ຈະໄດ້ພ້ອມກັນສືບຕໍ່ນຳເອົາເນື້ອໃນຜົນສຳເລັດ ກໍຄືມະຕິຂອງກອງປະຊຸມຄັ້ງນີ້ ໄປເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນ, ຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ເຂົ້າໃຈ ແນໃສ່ໃຫ້ທຸກຄົນໄດ້ປະກອບສ່ວນໃນການຈັດຕັ້ງປະຕິບັດຢ່າງພ້ອມພຽງກັນ ແລະ ກວ້າງຂວາງອອກໃນທົ່ວສັງຄົມ ໃຫ້ກາຍເປັນຮູບປະທຳນັບມື້ນັບຫຼາຍຂຶ້ນ.

**(ນາລີວັນ)**




# ຍ້ອງຄົນທີ່ຄວນຍ້ອງ

# ດັ້ນກິບເມກ




ຫົວຂໍ້ຂ້າງເທິງນີ້ ອອກລັກສະນະທີ່ໃຊ້ເຂົ້າໃນການບໍລິຫານ, ການຢູ່ຮ່ວມກັນຂອງຄົນໃນຄອບຄົວ ຫຼື ສັງຄົມໃດໜຶ່ງ; ຍ້ອງຄົນທີ່ຄວນຍ້ອງ ຍັງສາມາດໃຊ້ໄດ້ຢູ່ໃນສຳນັກງານອົງການ ຖ້າວ່າສົ່ງເສີມແຕ່ງຕັ້ງຍ້ອງຍໍແກ່ຄົນທີ່ຄວນຍ້ອງ ກໍຈະເຮັດໃຫ້ໜ່ວຍງານເຫຼົ່ານັ້ນກ້າວໜ້າ ແຕ່ຖ້າວ່າສົ່ງເສີມຜິດຄົນ, ຍ້ອງຍໍຄົນບໍ່ຄວນຍ້ອງ ໜ່ວຍງານດັ່ງກ່າວ ອາດຈະບໍ່ມີຄົນເຕັມໃຈເຮັດວຽກ ດັ່ງນັ້ນ, ທັງໃນຄອບຄົວ ແລະ ໜ່ວຍງານ ຖ້າພໍ່ແມ່ ຫຼື ຫົວໜ້າ ບໍລິຫານບໍ່ເປັນ ອາດສ້າງບັນຫາຫຼາຍກວ່າ ແກ້ບັນຫາ.

ພວກເຮົາມັກຈະໄດ້ຍິນຄຳເວົ້າຄົນບູຮານ ສອນເລື່ອງການໃຊ້ອຳນາດໃນການບໍລິຫານ-ການປົກຄອງ ວ່າຕ້ອງມີທັງ ພະເດດ ຄືອຳນາດ, ພະຄຸນ ຄືປາລະມີຄຸນຄວາມດີ ເວົ້າໃຫ້ສັ້ນອີກແບບໜຶ່ງໄດ້ວ່າ: ມີທັງຍ້ອງຍໍຊົມເຊີຍ ແລະ ລົງໂທດ ປົດຕຳແໜ່ງ ແຕ່ປະເດັນສຳຄັນຢູ່ທີ່ຫົວໜ້າຈະບໍລິຫານໄດ້ດີ ແລະ ຖືກຕ້ອງພຽງໃດ? ຖ້າໃຊ້ໃນຄອບຄົວ ກໍຂຶ້ນກັບພໍ່ແມ່ຈະສົ່ງເສີມລູກ ລ້ຽງລູກແບບໃດ? ເພາະປາກົດມີບາງຄອບຄົວ ລ້ຽງລູກແບບເທວະດາ ມີແຕ່ຕາມໃຈ ຍ້ອງຍໍເອົາໃຈ ເຖິງແມ່ນວ່າລູກເຮັດຜິດກໍເຂົ້າຂ້າງ ສຸດທ້າຍເດັກນ້ອຍຫຍ້າມ ໄດ້ໃຈ ເນື່ອງຈາກພໍ່ແມ່ໃຊ້ແຕ່ພະຄຸນ ລູກເຮັດຜິດກໍບໍ່ສອນບໍ່ກ່າວ ຢ້ານແຕ່ລູກເສຍໃຈ ເຊິ່ງຄືງບໍ່ຕ່າງກັບໜ້າວຽກຂອງລູກນ້ອງໃນຫ້ອງການ ຖ້າເຫັນແກ່ພັກພວກ ແລະ ປະໂຫຍດ ກໍມີແຕ່ຕາມໃຈລູກນ້ອງ.

ເລື່ອງພະເດດ-ພະຄຸນ ຄືການໃຊ້ທັງອຳນາດ-ປາລະມີ ຍ້ອງຄົນທີ່ຄວນຍ້ອງ-ລົງໂທດຄົນທີ່ຄວນລົງໂທດ ເມື່ອເຮັດຜິດນັ້ນໄດ້ມາຈາກຄະຕິພຸດດັ່ງທີ່ມີຄາຖາບາລີ ເວົ້າໄວ້ວ່າ: ປັກຄັນເຫ ປັກຄະຫາລະນັງ ແປວ່າ: ຍ້ອງຄົນທີ່ຄວນຍ້ອງ, ນິກຄັນເຫ ນິກຄະຫາລະນັງ ແປຕາມໂຕວ່າ ຂົ່ມຄົນທີ່ຄວນຂົ່ມ ເຊິ່ງເທົ່າກັບວ່າ ລົງໂທດຄົນທີ່ຄວນລົງໂທດ, ສຸພາສິດສອງຂໍ້ນີ້ ເທົ່າກັບວິທີບໍລິຫານໃຊ້ທັງອຳນາດ ປາລະມີ ໝາຍຄວາມວ່າ ຫົວໜ້າມີທັງພະເດດ ແລະ ພະຄຸນ ຄືມີອຳນາດ ແລະ ໃຊ້ອຳນາດໃຫ້ຖືກຕ້ອງເປັນທຳ.

ສັງລວມໄດ້ວ່າ: ທັງຫົວໜ້າຄອບຄົວ ກໍຕ້ອງມີປັນຍາລ້ຽງລູກໃຫ້ເປັນ ເມື່ອເຮັດດີກໍຕ້ອງຍ້ອງຍໍ-ເມື່ອລະເມີດລະບຽບ-ເຮັດຜິດ ກໍຕ້ອງລົງໂທດ ເຊັ່ນດຽວກັນ ໃນໜ່ວຍງານອົງການ ຫົວໜ້າຕ້ອງປະພຶດເປັນທຳ, ຍຸຕິທຳແກ່ທຸກຝ່າຍ ຜູ້ເຮັດຜິດຕ້ອງລົງໂທດ ເປັນແບບຢ່າງ ບໍ່ດັ່ງນັ້ນຄວາມພິນາດຈະຕາມມາ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

ເວລາຂຽນສັບພາສາລາວຈຳນວນໜຶ່ງທີ່ອອກສຽງພະຍັນຊະນະ ຣ, ແຕ່ບາດເວລາເວົ້າຢ່າງບໍ່ເປັນທາງການສ່ວນຫຼາຍເຮົາມັກຈະອອກສຽງເປັນພະຍັນຊະນະ ລ ດັ່ງຕົວຢ່າງຕໍ່ໄປນີ້:

| ເວລາຂຽນ | ເວລາເວົ້າ |
|---|---|
| ຮ້ອຍສ່ວນຮ້ອຍ | ລ້ອຍສ່ວນລ້ອຍ |
| ຮຽບຮ້ອຍ | ລຽບລ້ອຍ |
| ຮຸ່ນທີໜຶ່ງ | ລຸ້ນທີໜຶ່ງ |
| ຮ້ອງເພງ | ລ້ອງເພງ |
| ກະທັດຮັດ | ກະທັດລັດ |
| ແປງຮ່າງ | ແປງລ້າງ |
| ຕັດສະຮູ້ | ຕັດສະລູ້ |
| ສາຍຮຸ້ງ | ສາຍລຸ້ງ |
| ບໍ່ລົງຮອຍກັນ | ບໍ່ລົງລອຍກັນ |

# ບຸນຫໍ່ເຂົ້າປະດັບດິນ

ແຫຼ່ງຄວາມຮູ້ໂດຍ: ອ.ສຸຈິນໂນທັມມະສາກະຍະມຸນີສີສຸທັມມະຣາຊາ ພິກຂຸ

ການເຮັດບຸນຫໍ່ເຂົ້າປະດັບດິນ ເປັນປະເພນີໜຶ່ງທີ່ຈັດຢູ່ໃນຮີດສິບສອງ ນິຍົມເຮັດໃນມື້ແຮມ 14 ຄ່ຳເດືອນເກົ້າດັບ, ບຸນຫໍ່ເຂົ້າປະດັບດິນ ເປັນບຸນທີ່ເຮັດຂຶ້ນເພື່ອອຸທິດສ່ວນບຸນກຸສົນໄປຫາ ເຜດ ຫຼື ຍາດພີ່ນ້ອງທີ່ລ່ວງລັບໄປແລ້ວ ເຂົ້າປະດັບດິນ ໄດ້ແກ່ເຂົ້າ ແລະ ອາຫານຫວານຄາວ ພ້ອມໝາກພູ ຢາສູບທີ່ຫໍ່ດ້ວຍໃບຕອງກ້ວຍ ເອົາໄປໄວ້ຕາມເຫງົ້າຕົ້ນໄມ້ ແຂວນໄວ້ຕາມງ່າໄມ້ ຕາມບໍລິເວນຕ້າຍວັດ (ກຳແພງວັດ) ຫຼື ວາງໄວ້ຕາມພື້ນດິນ "ຫໍ່ເຂົ້ານ້ອຍ" ພ້ອມກັບເຊີນວິນຍານຂອງຍາດພີ່ນ້ອງເອົາພັດຕາຫານໄປຖວາຍແດ່ພະສົງ ສາມະເນນ ແລ້ວອຸທິດສ່ວນກຸສົນແກ່ຜູ້ຕາຍ ໂດຍຢາດນ້ຳ ອຸທິດສ່ວນກຸສົນໄປຫາ.

ມູນເຫດຄວາມເປັນມາຂອງເລື່ອງການເຮັດບຸນຫໍ່ເຂົ້າປະດັບດິນນີ້ ເກີດຈາກຄວາມເຊື່ອຕາມນິທານທຳມະບົດວ່າ:

"ຍາດພີ່ນ້ອງຂອງພະເຈົ້າພິມພິສານ ໄດ້ຍັກຍອກເງິນວັດຂອງສິ່ງຕ່າງໆໄປເປັນຂອງຕົນເອງ ໃນສະໄໝພະກັດສະປະພະພຸດທະເຈົ້າ ພວກອະດີດຍາດພີ່ນ້ອງຂອງພະເຈົ້າພິມພິສານເຫຼົ່ານັ້ນ ເມື່ອຕາຍໄປແລ້ວ ໄດ້ໄປເກີດເປັນເຜດໃນນະຣົກ ຕະຫຼອດພຸດທະທັນດອນ ເມື່ອພະເຈົ້າພິມພິສານ ຖວາຍທານແດ່ພະສະມະນະໂຄດົມພຸດທະເຈົ້າ ແຕ່ລືມຢາດນ້ຳອຸທິດສ່ວນກຸສົນໄປໃຫ້ແກ່ພວກຍາດພີ່ນ້ອງເຫຼົ່ານັ້ນ ເມື່ອຕົກກາງຄືນມາ ພວກເຜດຍາດພີ່ນ້ອງຂອງພະເຈົ້າພິມພິສານເຫຼົ່ານັ້ນ ໄດ້ມາສົ່ງສຽງຮ້ອງອັນໂຫຍຫວນ ແລະ ສະແດງຮູບຮ່າງອັນເປັນຕາຢ້ານໃຫ້ແກ່ພະເຈົ້າພິມພິສານ ໄດ້ຍິນ ແລະ ເຫັນ ພໍຮຸ່ງເຊົ້າມື້ໃໝ່ຂຶ້ນມາ ຈຶ່ງໄດ້ໄປຖາມພະພຸດທະເຈົ້າ ພະພຸດທະອົງຈຶ່ງເລົ່າເລື່ອງລາວທີ່ເປັນມູນເຫດໃຫ້ພະເຈົ້າພິມພິສານໄດ້ຮັບຊາບ ພະເຈົ້າພິມພິສານ ຈຶ່ງໄດ້ເຮັດບຸນຖວາຍທານອີກ ແລ້ວຈຶ່ງອຸທິດສ່ວນກຸສົນໄປໃຫ້ພວກຍາດພີ່ນ້ອງທີ່ຕາຍໄປແລ້ວ ຫາກໄດ້ຮັບສ່ວນກຸສົນແລ້ວ ຈຶ່ງມາສະແດງຕົນໃຫ້ພະເຈົ້າພິມພິສານເຫັນ ແລະ ຊາບວ່າ ຄວາມທຸກທີ່ພວກເຂົາໄດ້ຮັບນັ້ນ ໄດ້ທຸເລົາເບົາບາງລົງແລ້ວ ເພາະການອຸທິດສ່ວນກຸສົນຂອງພະອົງ. ດັ່ງນັ້ນ, ຄົນລາວເຮົາຈຶ່ງຖືເອົາມູນເຫດນີ້ ເຮັດບຸນຫໍ່ເຂົ້າປະດັບດິນ ນັບແຕ່ມື້ນັ້ນຕິດຕໍ່ກັນມາບໍ່ໄດ້ຂາດ ສືບທອດມາຈົນເຖິງປັດຈຸບັນ.

ສ່ວນວິທີການເຮັດບຸນຫໍ່ເຂົ້າປະດັບດິນນັ້ນ ພໍຮອດມື້ແຮມ 13 ຄ່ຳ ເດືອນເກົ້າ ຊາວບ້ານຈະຫາງຫາກະກຽມອາຫານຫວານຄາວ ໄດ້ແກ່ ຊີ້ນ, ປາ, ເຜືອກ, ມັນ, ກ້ວຍ, ອ້ອຍ, ເຂົ້າຕົ້ມ, ເຂົ້າໜົມ, ນ້ຳອ້ອຍ, ນ້ຳຕານ, ໝາກໄມ້, ໝາກພູ ແລະ ອື່ນໆ ເພື່ອຈັດລ້ຽງກັນໃນຄອບຄົວ ແລະ ເຮັດບຸນຖວາຍພະພິກຂຸສົງ ສາມະເນນ ແຕ່ສ່ວນສຳລັບອຸທິດໃຫ້ຍາດພີ່ນ້ອງທີ່ຕາຍໄປແລ້ວນັ້ນ ໃຊ້ຫໍ່ດ້ວຍໃບຕອງກ້ວຍ ຫຼືຕອງຈິງ ອາຫານຫວານຫໍ່ໜຶ່ງ ອາຫານຄາວຫໍ່ໜຶ່ງ ແລະ ໝາກພູຫໍ່ໜຶ່ງ ຫຼືບາງຄົນກໍເຮັດໃສ່ກະທົງກໍມີ ຫຼື ບາງຄົນ ກໍເຮັດໃສ່ເຈ້ຍ ໂຟມ ສະໂນແລ້ວແຕ່ສະດວກ ຫຼືບາງຄົນກໍເອົາອາຫານຫວານຄາວໃສ່ໃນຫໍ່ດຽວກັນເລີຍກໍມີ ສິ່ງຂອງເຫຼົ່ານີ້ ຈະໜ້ອຍ ຫຼືຫຼາຍນັ້ນກໍແລ້ວແຕ່ສັດທາ.

ພໍຮອດເຊົ້າຂອງມື້ແຮມ 14 ຄ່ຳ ເດືອນເກົ້າ ຕອນເຊົ້າມືດ ຄື ເວລາປະມານ 4-6 ໂມງ ປະຊາຊົນຈະນຳເອົາອາຫານທີ່ຫໍ່ໄວ້ມື້ຄືນນີ້ ໄປວາງໄວ້ຕາມພື້ນດິນ ວາງແຈກໄວ້ຕາມບໍລິເວນວັດ ຕົ້ນໂພ ຕົ້ນໄມ້ ຕ້າຍວັດ ພ້ອມກັບຈູດທຽນ ແລະບອກກ່າວແກ່ເຜດຜີໃຫ້ມາຮັບເອົາສິ່ງຂອງ ແລະ ຜົນບຸນນັ້ນດ້ວຍ.

ບາງບ້ານ ຈະເອົາອາຫານທີ່ອຸທິດໃຫ້ແກ່ຜູ້ຕາຍຫຼັງເຮັດພິທີແລ້ວ ກໍຝັງໄວ້ໃນດິນກໍມີ ເພື່ອບໍ່ໃຫ້ຜູ້ໃດຜູ້ໜຶ່ງໄດ້ກິນອາຫານທີ່ເປັນຂອງເຫຼືອຂອງເຜດ ເພາະຢ້ານວ່າຈະກາຍເປັນເຜດໄປນຳ, ບາງບ້ານກໍມັກຈະເອົາຫໍ່ອາຫານຫຼັງພິທີນັ້ນໄປຜີຕາແຮກຢູ່ນາ ຫຼືບາງຄັ້ງກໍຫວ່ານລົງນ້ຳບູຊາພະຍານາກ ແລະ ແມ່ນ້ຳຄົງຄາ. ການວາງອາຫານໄວ້ຕາມພື້ນດິນ ຫຼືຕາມບ່ອນຕ່າງໆ ເພື່ອຈະໃຫ້ພວກເຜດມາຮັບເອົາຂອງອຸທິດໃຫ້ໄດ້ງ່າຍໆ ໂດຍບໍ່ຕ້ອງມີພິທີຫຍຸ້ງຍາກຫຍັງຫຼາຍ ສຳເລັດພິທີອຸທິດຜົນບຸນສົ່ງໄປໃຫ້ເຜດແລ້ວ ຊາວບ້ານກໍຈະນຳອາຫານທີ່ກຽມໄວ້ສ່ວນໜຶ່ງ ໄປຕັກບາດ ແລະ ຖວາຍທານແດ່ພະສົງ ສາມະເນນ ເຊິ່ງຈະມີການໄຫວ້ພະຮັບສິນ, ຖວາຍທານ, ຟັງເທດ ສະຫຼອງ 1 ກັນ, ຄາລະວະ ແລະ ຮັບພອນ ຢາດນ້ຳອຸທິດສ່ວນບຸນກຸສົນໄປຍັງເຜດຜີ ຫຼືຍາດຕິພີ່ນ້ອງທີ່ລ່ວງລັບໄປແລ້ວ ແລະ ແຜ່ເມດຕາໃຫ້ແດ່ສັບພະສັດ ທັງຫຼາຍທັງປວງ...ກໍເປັນອັນສຳເລັດພິທີບຸນຫໍ່ເຂົ້າປະດັບດິນ.




# ວິທີເຮັດວຽກ

## ພາກທີ 4
## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

**ສ) ແນວຄິດທ້ອງຖິ່ນ:**

ພະຍາດຕົວນີ້ ເຖິງວ່າບໍ່ຊົ່ວຮ້າຍ ທໍ່ບັນດາພະຍາດຕົວອື່ນກໍຕາມ, ຜົນຂອງມັນກໍເສຍຫາຍຫຼາຍ ທະແນມແຕ່ແມ່ນສຳນັກງານຂອງໂຕ ພາກສ່ວນຂອງໂຕ ແລະ ທ້ອງຖິ່ນໂຕໄດ້ຜົນດີກໍເປັນພໍ, ສ່ວນສຳນັກງານອື່ນ, ພາກສ່ວນອື່ນ ແລະ ທ້ອງຖິ່ນອື່ນນັ້ນ ຈະເປັນແນວໃດກໍຕາມຊ່າງ, ນັ້ນແມ່ນເບິ່ງຕື້ນໆ ບໍ່ເບິ່ງຮອບດ້ານ ບໍ່ເຂົ້າໃຈວ່າປະໂຫຍດສ່ວນໜ້ອຍ ຕ້ອງຂຶ້ນກັບປະໂຫຍດສ່ວນໃຫຍ່, ປະໂຫຍດຂອງພາກສ່ວນ ຕ້ອງຂຶ້ນກັບປະໂຫຍດທັງໝົດ.

**ຊ) ແນວຄິດຖືຕົວເປັນຜູ້ນຳ:**

ຕິຊະນະບາງຄັ້ງ ຫຼື ເຮັດໄດ້ບາງວຽກຢູ່ຕາມທ້ອງຖິ່ນ ກໍຖືວ່າໂຕເກັ່ງກ້າສາມາດຫຼາຍແລ້ວ ເປັນຜູ້ດີຫຼາຍແລ້ວ ສົມຄວາມເປັນຜູ້ນຳໄດ້ແລ້ວ, ບໍ່ຮູ້ວ່າເມື່ອປຽບໃສ່ວຽກງານປົດປ່ອຍປະເທດຊາດທັງໝົດແລ້ວຄວາມສຳເລັດທີ່ຕົນເຮັດໄດ້ນັ້ນມັນເປັນສິ່ງເລັກນ້ອຍບໍ່ສາເຫດຫຍັງ, ຖ້າປຽບໃສ່ວຽກການອັນມະຫາສານຂອງໂລກແລ້ວ ມັນກໍຍິ່ງບໍ່ສາເຫດຫຍັງ.

ເປັນທຳມະດາ ທີ່ພັກເຮົາຫວັງຈະໃຫ້ມີຄົນດີ ເປັນວິລະຊົນ ຫຼາຍຄົນເປັນຜູ້ນຳ, ຫຼາຍຄົນໃຫ້ມີປະຊາຊົນເຊື່ອຖືຮັກແພງ ແລະ ນັບຖື, ບັນດາວິລະຊົນ ແລະ ຜູ້ນຳແນວນັ້ນ ເປັນສິ່ງປະເສີດຂອງພັກ ແລະ ຂອງຊາດ ແຕ່ວ່າວິລະຊົນ ແລະ ຜູ້ນຳແນວນັ້ນ ລ້ວນແຕ່ອອກມາຈາກການຕໍ່ສູ້ ແລະ ຕ້ອງຜ່ານບົດຮຽນຂອງການຫຼໍ່ຫຼອມອົບຮົມ, ມັນບໍ່ແມ່ນວ່າໂຕເອງຢາກເປັນຜູ້ນຳ ແລະ ຢາກເປັນວິລະຊົນແລ້ວກໍໄດ້ເປັນໂລດ ໂດຍບໍ່ຕ້ອງຮຽນສ້າງຕົວ.

ອ່ານຕໍ່ສະບັບໜ້າ...



## ສຸຂະພາບທາຍໂຣຄ

# ກາເຟ

**ໂດຍ: ສາວເໜືອ**



ຄະນະນັກວິທະຍາສາດ ໃນ ສ.ອາເມລິກາ ໄດ້ສຶກສາ ຄົ້ນຄວ້າ ແລະ ພົບວ່າ ການດື່ມ ກາເຟ 5 ຈອກຕໍ່ມື້ ຊ່ວຍຫຼຸດ ບັນຫາດ້ານຄວາມຈື່ຈຳ ທີ່ເກີດ ຈາກພະຍາດຄວາມຈື່ຈຳເສື່ອມ (ອັນໄຊເມີ) ໄດ້ ດ້ານນັກວິໄຈ ອັງກິດ ພັດກ່າວເຕືອນວ່າ ຄົນ ເຈັບເປັນພະຍາດຄວາມຈຳເສື່ອມ ຍັງບໍ່ຄວນຫັນໄປດື່ມກາເຟ ເພື່ອ ຫວັງຜົນດັ່ງກ່າວນັ້ນ.

ຄະນະນັກວິທະຍາສາດ ຈາກມະຫາວິທະຍາໄລຟລໍຣິດາ ໄດ້ເຮັດການທົດລອງກັບໜູ ຈຳນວນ 55 ໂຕ ທີ່ຖືກເຮັດ ໃຫ້ມີອາການພະຍາດສະໝອງ ກໍຄືຄວາມຈຳເສື່ອມ ເຂົາເຈົ້າໄດ້ ທົດລອງທາງພຶດຕິກຳກ່ອນ ເພື່ອໃຫ້ແນ່ໃຈວ່າ ໜູມີບັນຫາ ດ້ານຄວາມຈຳ ເມື່ອອາຍຸ ໄດ້ 18-19 ເດືອນ ທຽບເທົ່າກັບ ຄົນອາຍຸ 70 ປີ ຈາກນັ້ນ ໃຫ້ ໜູຈຳນວນໜຶ່ງກິນນ້ຳປະສົມ ກາເຟອິນ ວັນລະ 500 ມິນລິ ກຣາມ ຫຼື ເທົ່າກັບຄົນດື່ມກາເຟ 5 ຈອກ ຕໍ່ວັນ ແລະ ໜູອີກຈຳ ນວນໜຶ່ງກິນນ້ຳລ້າໆ. ເຫັນໄດ້ ວ່າ ປະລິມານກາເຟອິນດັ່ງກ່າວ ທຽບເທົ່າກາເຟອິນໃນກາເຟປຸງ ແຕ່ງພິເສດ ເຊັ່ນ: ກາປູຊີໂນ ຫຼື ອະລາເຕ 2 ຈອກ, ກາເຟອິນ ໃນຊາ 14 ຈອກ, ກາເຟອິນໃນ ນ້ຳອັດລົມ 20 ຈອກ ຜ່ານໄປ 2 ເດືອນ ທົດລອງອີກເທື່ອໜຶ່ງ ພົບວ່າ ໜູກິນນ້ຳປະສົມກາເຟ ອິນ ສ້າງແບບທົດລອງດ້ານ ຄວາມຈື່ຈຳ ແລະ ທັກສະການ ຄິດໄດ້ດີຂຶ້ນ ຕ່າງຈາກໜູໄວອາຍຸ ດຽວກັນ ທີ່ບໍ່ມີອາການສະໝອງ ເສື່ອມ. ສ່ວນໜູທີ່ກິນນ້ຳລ້າໆ ຍັງຄົງສ້າງຄະແນນໄດ້ບໍ່ດີ.

ນອກຈາກນີ້, ການທົດ ລອງ ຍັງພົບວ່າ ສະໝອງຂອງ ໜູທີ່ກິນນ້ຳປະສົມກາເຟອິນ ມີ ລະດັບໂປຣຕີນ, ເບຕາອະມີ ລອຍຫຼຸດລົງເກືອບເຄິ່ງໜຶ່ງ ເຊິ່ງ ຕາມປົກກະຕິ ສຳລັບຄົນເຈັບ ຄວາມຈື່ຈຳເສື່ອມ ຈະມີໂປຣ ຕີນນີ້ຈັບຕົວເປັນກ້ອນຢູ່ໃນ ສະໝອງ ແລະ ເມື່ອທົດລອງ ກໍໄປພົບວ່າ ກາເຟອິນສົ່ງຜົນຕໍ່ ການຜະລິດເອັນໄຊທີ່ຈຳເປັນ ຕໍ່ການຜະລິດໂປຣຕີນ ເບຕາ ອະມິລອຍນຳດ້ວຍ. ຄະນະນັກ ວິໄຈສັນນິຖານວ່າ ກາເຟອິນ ໄປກົດຜົນຂອງການອັກເສບ ໃນສະໝອງທີ່ເຮັດໃຫ້ລະດັບໂປຣຕີນ ສູງເກີນປົກກະຕິ. ກ່ອນໜ້ານີ້ ພວກເຂົາ ເຈົ້າເຄີຍທົດລອງກັບໜູອາຍຸນ້ອຍ ທີ່ມີ ອາການອັນໄຊເມີ ດ້ວຍການໃຫ້ກາເຟອິນ ເມື່ອເລີ່ມໃຫຍ່ ພົບວ່າຊ່ວຍປ້ອງກັນການ ເກີດບັນຫາດ້ານຄວາມຈຳໄດ້. ຄະນະນັກ ວິໄຈເຫັນວ່າ ຈະເລີ່ມທົດລອງກັບຄົນໄດ້ ໃນບໍ່ຊ້ານີ້ ແຕ່ຍັງບໍ່ແນ່ໃຈວ່າ ການໃຫ້ກາ ເຟອິນ ປະລິມານໜ້ອຍ ຈະໃຫ້ຜົນເຊັ່ນດຽວ ກັນກັບໜູ ຫຼືບໍ່. ຄົນສ່ວນໃຫຍ່ ສາມາດ ຮັບທາດກາເຟອິນ ໄດ້ຢ່າງປອດໄພສູງສຸດ 500 ມິນລິ ກຣາມຕໍ່ວັນ; ແຕ່ສຳລັບ ແມ່ຍິງ ຖືພາ ຫຼືແມ່ມານ ແລະ ຜູ້ມີພະຍາດຄວາມ ດັນເລືອດສູງ ຄວນກິນກາເຟຢ່າງຈຳກັດ.

ດ້ານມູນນິທິວິໄຈພະຍາດຄວາມຈື່ ຈຳສະໝອງເສື່ອມ ເຫັນວ່າ ເຖິງວ່າເຫັນ ຜົນຈາກການທົດລອງກັບໜູ, ແຕ່ໄວເກີນ ໄປທີ່ຈະແນະນຳໃຫ້ຄົນເຈັບຄວາມຈຳ ສະໝອງເສື່ອມດື່ມກາເຟ ຫຼື ກິນຜະລິດ ຕະພັນອາຫານເສີມປະເພດກາເຟອິນ ເພື່ອ ຫວັງເຮັດໃຫ້ຄວາມຈື່ຈຳເສື່ອມດີຂຶ້ນ.

## ອາດ ກະວີລາວ

# ເຊີນທ່ຽວຫຼວງພະບາງ

**# ສາວຄູ ວັງຄຳລົ່ນ**

❊ ຫຼວງພະບາງຊື່ນີ້ ລືຊ່ຳມານານ
ຄົນກ່າວຂານດັງໄກ ຊື່ນຊົມນິຍົມຍ້ອງ
ຫຼວງພະບາງລືກ້ອງ ປະເພນີເດີມເກົ່າ
ຮີດ 12 ຄອງ 14 ມິເສື່ອມເສົ້າ ປະຊາເຊື້ອຮັກສາ ນັ້ນນາ

❊ ວັດທະນະທຳເອກອ້າງ ເຮືອງຮຸ່ງຕະການຕາ
ປວງປະຊາຫວງແຫນ ຮີດຄອງຄາວກີ້
ສາມັກຄີເສີມສ້າງ ງານບຸນປາງປູ່
ບໍ່ໃຫ້ດູຕ່ຳຕ້ອຍ ສູນສິ້ນຫ່າງຫາຍ ແທ້ໃດ

❊ ຫຼວງພະບາງ ອະນຸລັກໄວ້ ບຸນໃຫຍ່ປະຈຳປີ
ຊ່ວງເຮືອປະເພນີ ມ່ວນຫຼາຍເຫຼືອລົ້ນ
ບາງຄົນຊຸມແຊວເອີ້ນ ວາຈາຂານສົ່ງ
ບາງຜ່ອງລົງລ່ອງນ້ຳ ຫົວຍິ້ມໃສ່ກັນ ມ່ວນເດ

❊ ບຸນຊ່ວງເຮືອແມ່ນມື້ ແຮມ 14 ເດືອນກັນຍາ
ວັນຫໍ່ເຂົ້າປະດັບດິນ ທົ່ວທານີແຄວ້ນ
ແດນດ່ານຫຼວງພະບາງກ້ຳ ໂຮມເຮືອລົງທ່າ
ເຊີນທ່ານມາຮ່ວມເຕົ້າ ສອງເບື້ອງຍິ່ງຄານ ພີ້ນາ

❊ ເຊີນເນີ ພີ່ງພີ່ນ້ອງ ໃນທົ່ວແດນລາວ
ຊົມແຂ່ງຂັນເຮືອຍາວ ຢູ່ຫຼວງພະບາງເບື້ອງ
ນັກສີພາຍຫັນຫ້າວ ສຸມກຳລັງເຕັມທີ່
ມີຄວາມຫວັງຍາດໄດ້ ຂັນໄຊໄວ້ຢູ່ມື ແທ້ນາ

❊ ມາເຍີ ມາໂຮ່ຮ້ອງ ເຊຍຊ່ວງເຮືອຍາວ
ມາໝາຍຕາເອົາສາວ ເຂດດິນແດນນີ້
ໂລະລາດມວນຊົນພ້ອມ ກໍມີເດີເຊີນທ່ຽວ
ມາກ້ຽວສາວຕ່າງບ້ານ ເປັນໃພ້ແມ່ຊາຍ ແດ່ນາ






## ຫົວຂໍ້ ຜັກຫວາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ແຮມ** 14 ຄ່ຳເດືອນເກົ້າ **ບຸນຫໍ່ເຂົ້າປະດັບດິນ** ເຊິ່ງເປັນ**ປະເພນີ**ຂອງຊາວພຸດທັງຫຼາຍ **ເດືອນເກົ້າດັບມໍ່ໂກ** ສິບໃຫຍ່ກາງພັນສາ ຊາວພຸດທັງໂລກາ ຕ່າງຄອງຄອຍຖ້າ ກຽມສັບຫາອາຫານເຂົ້າ ຄາວຫວານຫຼາຍເຍື່ອງ ຫໍ່ເຂົ້າຝັງຝາກເບື້ອງ ຫ່ອະບີພື້ນແຜ່ນທະລັງ ຈຸດໝາຍຫວັງຍື່ນຕ້ອນ **ອຶບຍາດຍາດຜູ້ລາໄລ** ທັງເຜດຜີທັງຫຼາຍ ອຸທິດບຸນກຸສົນໃຫ້ ເຈົ້າກ່ານາຍເອນພ້ອມ ເພື່ອບັນເທົາທຸເລົາທຸກ ປະສົບສຸກສືບສ້າງ ເລີຍທ່າເລື້ອຍສືບມາ **ນັ້ນແລ້ວ!**

❊ **ຂ່າວ** "ແຮງງານລາວຍັງຕ້ອງການໄປເຮັດວຽກຢູ່ຕ່າງປະເທດຢ່າງຕໍ່ເນື່ອງ" ໂດຍສະເພາະ **ໄທ ເກົາຫຼີ ແລະ ຍີ່ປຸ່ນ** ນັບແຕ່ເປີດປະເທດເດືອນ**ມີນາ 2022** ຫາມິຖຸນາ 2023 ຈັດສົ່ງແຮງງານເຂົ້າໄທໄດ້ເກືອບໜຶ່ງແສນຄົນ ເກົາຫຼີເກືອບສາມໝື່ນຄົນ ແລະ ຍີ່ປຸ່ນເຈັດຮ້ອຍກວ່າຄົນ ເຫັນແລ້ວຊົມເຊີຍຍ້ອງ ຊາຍໜຸ່ມຍິງສາວ **ຂ່າວໄດ້ຍົກໃຫ້ເຫັນ** ຄ່າກິນຊົມໃຊ້ ວ່າໄປຫາເງິນທາງນັ້ນ ການເກັບອອມພໍໄດ້ຢູ່ **ຫາເງິນມາຊ່ອຍຢູ່** ຕ້ານເງິນເຟີ້ໃຫ້ຜ່ອນເບົາ **ພີ່ນ້ອງເອີຍ!**

## 🤗 ຊອບຍິ້ມ 🤗

**# ແອ່ນຕຸ້ງ**

### ຫລັກບໍ່ຫຼອກ!!

ໃນຂະນະທີ່ສາວຕຸ້ຍນອນກັບຊາຍຊູ້ຢູ່ນັ້ນ ສຽງໂທລະສັບກໍດັງຂຶ້ນ, ສາວຕຸ້ຍຮັບ ລົມບຶດໜຶ່ງແລ້ວວາງສາຍ, ທ້າວດີ ຜູ້ເປັນຊາຍຊູ້ຂອງນາງເລີຍຖາມວ່າ:

**ທ້າວດີ:** ໃຜໂທມາ

**ສາວຕຸ້ຍ:** ກະຜົວນ້ອງ ສຽວອ້າຍທັ້ນລະ ລາວບອກວ່າບໍ່ໃຫ້ຖ້າ ເພາະລາວກຳລັງກິນເບຍກັບອ້າຍຢູ່ແຄມຂອງວ່າຊັ້ນ.



### ຄະຕິເຕືອນໃຈ

**#ດອກຫຍ້າ**

ຄັນໄດ້ຟັງຄ່າເວົ້າ ຊົມໃບໆຢ່າຟ້າວລົ່ມ
ລາງເທື່ອຊົມລໍ້ເພ້ຍ ເມື່ອໜ້າຫາກຊິດີ




## ຮັບໃຊ້ - ບໍລິການ

"ຮັບໃຊ້" ແລະ "ບໍລິການ" ເປັນຄໍາຮ່ວມຄວາມໝາຍ ເຊິ່ງມີທີ່ມາແລະການນໍາໃຊ້ຕ່າງກັນດັ່ງນີ້:

"ຮັບໃຊ້" ເປັນຄໍາປະສົມປະເພດຄໍາກິລິຍາ ຈາກເຄົ້າລາວເດີມ ປະກອບດ້ວຍຄໍາວ່າ "ຮັບ" ໝາຍເຖິງ "ປະຕິບັດຕາ" ເຊັ່ນ ລາວຮັບວ່າຈະມາ, ແລະ "ໃຊ້" ໝາຍເຖິງ "ສັ່ງໃຫ້ເຮັດ" ເຊັ່ນ ແມ່ໃຊ້ລູກໄປຊື້ເຄື່ອງຢູ່ຕະຫຼາດ. ເມື່ອສອງຄໍານີ້ປະສົມເຂົ້າກັນເປັນ "ຮັບໃຊ້" ກໍໝາຍເຖິງ "ປະຕິບັດໜ້າທີ່ແລະເຮັດຕາມຄວາມຕ້ອງການຂອງວຽກງານ, ປະຕິບັດແລະເຮັດວຽກຕາມຄວາມຕ້ອງການຂອງຜູ້ອື່ນດ້ວຍຄວາມເຕັມໃຈ" ເຊັ່ນ

- ສະໜາມຍິງປືນ 5 ເມສາ ພ້ອມ 100% ຮັບໃຊ້ຊຽງຂວາງເກມ.
- ພະນັກງານຂອງອົງການໄອຍະການປະຊາຊົນແຂວງ ໄດ້ເຊີດຊູຄວາມ
- ພາຍຫຼັງຮຽນຈົບແລ້ວ ລາວກໍສະໝັກເຂົ້າຮັບໃຊ້ຊາດດ້ວຍການເປັນທະຫານ.
- ພະນັກງານພວກເຮົາທຸກຄົນຕ້ອງເຮັດຫຼ້ອນໜ້າທີ່ທີ່ພັກ, ລັດ ແລະ ປະຊາຊົນມອບໝາຍໃຫ້ ພ້ອມທັງຮັບໃຊ້ຊາດ, ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ.

ນອກຈາກນັ້ນ, ຮັບໃຊ້ ຍັງສາມາດເປັນປະເພດຄໍາວິເສດ ເພື່ອຂະຫຍາຍຄໍາອື່ນ ເຊັ່ນ

- ນາງຄໍາເຮັດວຽກເປັນຄົນຮັບໃຊ້ຢູ່ເຮືອນທ່ານທອງສີມາໄດ້ຫຼາຍປີແລ້ວ.

"ບໍລິການ" ເປັນຄໍາປະສົມປະເພດຄໍາກິລິຍາ ຈາກເຄົ້າປາລີ ປະກອບດ້ວຍຄໍາວ່າ ບໍລິ ທີ່ຜັນປ່ຽນມາຈາຄໍາອຸປະສັກ Pari (ປຣິ) ໝາຍເຖິງ "ຮອບ" ແລະ "ການ" ທີ່ຜັນປ່ຽນມາຈາກ Kāra (ກາຣະ) ໝາຍເຖິງ "ຜູ້ເຮັດ, ຜູ້ຮັບໃຊ້, ວຽກງານ". ເມື່ອທັງສອງຄໍານີ້ປະກອບເຂົ້າກັນເປັນ "ບໍລິການ" ກໍໄດ້ຄວາມໝາຍວ່າ "ປະຕິບັດຮັບໃຊ້, ໃຫ້ຄວາມສະດວກຕ່າງໆ" ເຊັ່ນ

- ຮ້ານນີ້ບໍລິການລູກຄ້າດີ.
- ເຮົາເປັນພະນັກງານລັດເຮັດວຽກຮັບໃຊ້ປະຊາຊົນ ດັ່ງນັ້ນຈຶ່ງຕ້ອງບໍລິການໃຫ້ຖືກໃຈປະຊາຊົນ.

ພ້ອມກັນນັ້ນ "ບໍລິການ" ຍັງສາມາດເປັນຄໍາປະເພດຄໍານາມເຊິ່ງໝາຍເຖິງ"ການຮັບໃຊ້,ການໃຫ້ຄວາມສະດວກຕ່າງໆ" ເຊັ່ນ

- ເຮືອນພັກແຫ່ງນີ້ໃຫ້ບໍລິການຜູ້ມາພັກເຊົາໄດ້ຢ່າງດີຢ້ຽມ.
- ຂ້ອຍໃຊ້ບໍລິການບໍລິສັດຂົນສົ່ງນີ້ມາເປັນເວລາດົນແລ້ວ.
- ທະນາຄານແຫ່ງນີ້ ມີບໍລິການຫຼາຍຢ່າງ ເປັນຕົ້ນແມ່ນ ບໍລິການເບີກຈ່າຍເງິນເດືອນ, ບໍລິການແຊັກ.

"ບໍລິການ" ຍັງສາມາດເປັນປະເພດຄໍາວິເສດ ທີ່ຂະຫຍາຍຄໍາອື່ນ ເຊັ່ນ

- ປກສ ເມືອງປາກຊັນ ແຂວງບໍລິຄໍາໄຊ ສຶກສາອົບຮົມເຈົ້າຂອງຮ້ານກິນດື່ມ ແລະສາວບໍລິການ.

# ລາຄາເຂົ້າໃນຕະຫຼາດໂລກ ຍັງບໍ່ມີສັນຍານທີ່ຈະຫຼຸດລົງ



ລາຍງານຂ່າວເມື່ອອາທິດຜ່ານມາໃຫ້ຮູ້ວ່າ: ລາຄາເຂົ້າຂອງບັນດາປະເທດສົ່ງອອກທີ່ສໍາຄັນ ລວມທັງໄທ ແລະ ຫວຽດນາມ ໄດ້ເພີ່ມຂຶ້ນປະມານ 20% ນັບຕັ້ງແຕ່ອິນເດຍ ໄດ້ຈໍາກັດການສົ່ງອອກເຂົ້າບາງປະເພດ, ເຮັດໃຫ້ການສະໜອງທົ່ວໂລກເຄັ່ງຕຶງ.

ຂ່າວລະບຸວ່າ: ລາຄາເຂົ້າທີ່ເພີ່ມຂຶ້ນໄດ້ຊຸກຍູ້ໃຫ້ຊາວກະສິກອນອິນເດຍເປີດກວ້າງເຂດປູກຝັງ. ຂໍ້ມູນຈາກກະຊວງກະສິກໍາອິນເດຍ ເມື່ອບໍ່ດົນຜ່ານມາ, ສະແດງໃຫ້ເຫັນວ່າ: ເນື້ອທີ່ປູກເຂົ້າຂອງອິນເດຍເພີ່ມຂຶ້ນ 3,7% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ເປັນ 39,8 ລ້ານເຮັກຕາ. ປະເທດຜູ້ຜະລິດ ແລະ ບໍລິໂພກເຂົ້າລາຍໃຫຍ່ອັນດັບ 2 ຂອງໂລກ ປູກເຂົ້າຫຼາຍຂຶ້ນກວ່າເກົ່ານັ້ນ ອາດສາມາດຫຼຸດຜ່ອນຄວາມກັງວົນກ່ຽວກັບການສະໜອງເຂົ້າພາຍໃນປະເທດ.

ໃນເດືອນກໍລະກົດ, ອິນເດຍ ໄດ້ວາງມາດຕະການຫ້າມການສົ່ງອອກເຂົ້າຂາວທີ່ບໍ່ແມ່ນເຂົ້າບາສມາຕິ (basmati), ໂດຍບໍ່ຄາດຄິດວ່າການສົ່ງອອກເຂົ້າຂອງປະເທດຈະຫຼຸດລົງເກືອບເຄິ່ງໜຶ່ງ.

ໃນຂະນະດຽວກັນ, ກະຊວງການຄ້າໄທ ໃຫ້ຮູ້ວ່າ: ການສົ່ງອອກເຂົ້າຂອງໄທ ໄລ່ຮອດວັນທີ 29 ສິງຫາ ເພີ່ມຂຶ້ນ 11,9% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ຂຶ້ນເປັນ 5,29 ລ້ານໂຕນ.

# ອົງການປົກຄອງນະຄອນເບີມິງແຮມຂອງອັງກິດ ປະກາດລົ້ມລະລາຍ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 5 ກັນຍານີ້ ຕາມເວລາທ້ອງຖິ່ນ, ຄະນະກໍາມະການປົກຄອງນະຄອນເບີມິງແຮມ ຕົວເມືອງໃຫຍ່ອັນດັບ 2 ຂອງອັງກິດ ໄດ້ປະກາດລົ້ມລະລາຍ ເຊິ່ງນະຄອນດັ່ງກ່າວ ຈະໂຈະງົບປະມານລາຍຈ່າຍໃໝ່ທຸກຢ່າງ ຍົກເວັ້ນການບໍລິການທີ່ກໍານົດດ້ວຍກົດໝາຍ ເຊັ່ນ: ປົກປ້ອງກຸ່ມຄົນດ້ອຍໂອກາດເປັນຕົ້ນ.

ອີງຕາມມາດຕາໃນ "ກົດໝາຍວ່າດ້ວຍການເງິນຂອງອົງການປົກຄອງທ້ອງຖິ່ນ" ສະບັບປີ 1988 ຂອງອັງກິດ, ຖ້າຫົວໜ້າຝ່າຍການເງິນຂອງຄະນະກໍາມະການປົກຄອງນະຄອນເບີມິງແຮມ ເຫັນວ່າ, ອົງການປົກຄອງນະຄອນບໍ່ສາມາດບັນລຸຄວາມດຸນດ່ຽງລະຫວ່າງລາຍຮັບ ແລະ ລາຍຈ່າຍ ກໍໝາຍຄວາມວ່າ, ຄະນະກໍາມະການດັ່ງກ່າວ ໃນຕົວຈິງແມ່ນລົ້ມລະລາຍແລ້ວ. ໃນໄລຍະຕໍ່ໄປ, ຄະນະກໍາມະການປົກຄອງນະຄອນເບີມິງແຮມ ຈໍາເປັນຕ້ອງຈັດກອງປະຊຸມປຶກສາບັນຫາທີ່ເກີດຂຶ້ນຕາມຫຼັງ ພາຍໃນ 21 ວັນ. ນອກນີ້, ນອກຈາກການບໍລິການທີ່ກໍານົດດ້ວຍກົດໝາຍວ່າດ້ວຍການປົກປ້ອງກຸ່ມຄົນດ້ອຍໂອກາດແລ້ວ, ຈະບໍ່ອະນຸຍາດໃຫ້ມີງົບປະມານລາຍຈ່າຍອື່ນໆ, ແຕ່ຈະສືບຕໍ່ປະຕິບັດຕາມຄໍາໝັ້ນສັນຍາ ແລະ ສັນຍາຕ່າງໆ ທີ່ມີຢູ່ໃນປັດຈຸບັນ.

# ໂຄສົກກະຊວງການຕ່າງປະເທດຈີນ ຕອບຄໍາຖາມນັກຂ່າວກ່ຽວກັບຈີນອອກ "ກົດໝາຍຍົກເວັ້ນຕ່າງປະເທດ"

ອີງຕາມການລາຍງານຂ່າວໃນວັນທີ 5 ກັນຍານີ້ ໃຫ້ຮູ້ວ່າ: ໂຄສົກກະຊວງການຕ່າງປະເທດຈີນ ໄດ້ຕອບຄໍາຖາມນັກຂ່າວກ່ຽວກັບຈີນວາງ "ກົດໝາຍຍົກເວັ້ນຕ່າງປະເທດ".

ທ່ານໄດ້ກ່າວວ່າ: ການອອກກົດໝາຍຍົກເວັ້ນຕ່າງປະເທດ ແມ່ນວຽກງານນິຕິບັນຍັດທີ່ເປັນປົກກະຕິຂອງສະພາປະຊາຊົນແຫ່ງຊາດຈີນ. "ກົດໝາຍຍົກເວັ້ນຕ່າງປະເທດ" ໄດ້ຢືນຢັນຕໍ່ຫຼັກການພື້ນຖານຂອງປະເທດຕ່າງໆຢູ່ໃນໂລກ ແລະ ຊັບສິນຂອງເຂົາເຈົ້າມີສິດຍົກເວັ້ນໃນປະເທດຈີນ ແລະ ໄດ້ກໍານົດກໍລະນີພິເສດ ໂດຍໄດ້ກໍານົດຢ່າງຈະແຈ້ງວ່າ: ສານຈີນສາມາດປະຕິບັດສິດຄຸ້ມຄອງຕໍ່ການດໍາເນີນຄະດີທີ່ເກີດຂຶ້ນຍ້ອນການກະທໍາທີ່ບໍ່ກ່ຽວຂ້ອງກັບອະທິປະໄຕຂອງຕ່າງປະເທດ ເຊັ່ນ: ການດໍາເນີນຄະດີທີ່ມີຄວາມຂັດແຍ້ງກັນກ່ຽວກັບການເຄື່ອນໄຫວທາງການຄ້າ, ການທໍາຮ້າຍຮ່າງກາຍ ແລະ ຄວາມເສຍຫາຍດ້ານຊັບສິນເປັນຕົ້ນ ພ້ອມທັງສາມາດປະຕິບັດມາດຕະການບັງຄັບຕໍ່ການເຄື່ອນໄຫວດ້ານການຄ້າ ແລະ ຊັບສິນຂອງລັດຖະບານຕ່າງປະເທດ ພາຍໃຕ້ເງື່ອນໄຂຈໍາກັດທີ່ເຂັ້ມງວດ ທັງໝົດເຫຼົ່ານີ້ແມ່ນສອດຄ່ອງກັບກົດໝາຍລະຫວ່າງຊາດ ແລະ ພຶດຕິກໍາຂອງປະເທດຕ່າງໆຢູ່ໃນໂລກ.

ໃນຖານະທີ່ເປັນປະເທດໃຫຍ່ທີ່ມີນໍ້າໃຈຮັບຜິດຊອບ, ຈີນເດັດດ່ຽວປົກປັກຮັກສາຫຼັກການສະເໝີພາບດ້ານອະທິປະໄຕແຫ່ງຊາດ, ຈະປົກປ້ອງສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງພົນລະເມືອງຈີນ ແລະ ນິຕິບຸກຄົນ, ເຄົາລົບສິດຍົກເວັ້ນທີ່ຄວນມີຂອງລັດຖະບານຕ່າງປະເທດຕາມກົດໝາຍສາກົນ.

ເຈົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ແກ້ໄຂບັນຫາສາສະໜາ ຕ້ອງມີຄວາມລະອຽດອ່ອນ

ພາຍໃຕ້ຫົວຂໍ້ບົດປະຈຳ "ຜູ້ແທນປະຊາຊົນ" ສະບັບນີ້, ຜູ້ຂຽນຂໍສະເໜີບົດຮຽນຂອງບາງປະເທດໃນການຄຸ້ມຄອງ ແລະ ແກ້ໄຂບາງບັນຫາທີ່ພົວພັນກັບວຽກສາສະໜາ. ທີ່ເລືອກເອົາຫົວຂໍ້ນີ້ມາເວົ້າໃຫ້ຟັງ ກໍຍ້ອນວ່າໃນປັດຈຸບັນ ໄດ້ມີຫຼາຍເຫດການທີ່ສົ່ງຜົນກະທົບກະເທືອນຕໍ່ຈິດໃຈຂອງເຫຼົ່າ ສາສະນິກະຊົນໃນຫຼາຍສາສະໜາ ເຊິ່ງກໍໃຫ້ມີການໃຊ້ຄວາມຮຸນແຮງ ກໍຄືຄວາມອາຄາດມາດຮ້າຍ ກາຍເປັນບັນຫາພາກພື້ນ ແລະ ສາກົນ. ຕົວຢ່າງ ເຫດການຈູດປຶ້ມ ກູຣານ (Quran) ສອງຄັ້ງໃນໄລຍະໄລ່ເລ່ຍກັນຢູ່ປະເທດ**ສະວີເດັນ (ຊູແອັດ).** ກູຣານແມ່ນປຶ້ມຄຳພີຄຳສອນຂອງສາສະໜາອິດສະລາມ. ການກະທຳດັ່ງກ່າວຂອງກຸ່ມຫົວຮຸນແຮງ ໄດ້ສ້າງຄວາມແຄ້ນເຄືອງໃຫ້ແກ່ຊາວມຸດສະລິມ ໃນທົ່ວໂລກທີ່ສະແດງອອກໃນຮູບການປະທ້ວງຢ່າງກວ້າງຂວາງ. ເຖິງຂັ້ນຫົວໜ້າໜ່ວຍງານປະສານງານເພື່ອຄວາມສີວິໄລຂອງອົງການສະຫະປະຊາຊາດ (ສປຊ) ໄດ້ອອກມາກ່າວປະນາມການກະທຳຂອງພວກຫົວຮຸນແຮງ ພ້ອມທັງໄດ້ຮຽກຮ້ອງໃຫ້ບັນດາຜູ້ນຳທາງສາສະໜາໃນທົ່ວໂລກ ເອົາມາດຕະການອັນຈຳເປັນ ເພື່ອປົກປັກຮັກສາຄຳພີຄຳສອນ, ສະຖານທີ່ກາບໄຫວ້ບູຊາທາງສາສະໜາ ກໍຄືການເຊື່ອຖືບໍ່ໃຫ້ຖືກທຳລາຍໂດຍກຸ່ມຄົນບໍ່ດີທັງປວງ. ຢູ່**ມາເລເຊຍ**, ປະເທດໃນຄອບຄົວໃຫຍ່ອາຊຽນຂອງພວກເຮົານັ້ນ ມີກົດໝາຍຄຸ້ມຄອງສາສະໜາ ໂດຍໄດ້ກຳນົດໂທດໃສ່ຜູ້ເຄື່ອນໄຫວຕ້ານສາສະໜາ ດ້ວຍການຕັດອິດສະລະພາບ ແຕ່ 2 ຫາ 5 ປີ. ສຳລັບຜູ້ທີ່ໃຊ້ເຄືອຂ່າຍສື່ສານສັງຄົມເພື່ອເປົ້າໝາຍໝິ່ນປະໝາດ ຫຼື ຢຽບຢ່ຳສາສະໜາ ກໍຈະໄດ້ຮັບໂທດຕັດອິດສະລະພາບສູງສຸດ 1 ປີ ຫຼື ຖືກປັບໃໝເປັນເງິນ 50.000 ຣິງກິດ. ໜັງສືພິມ The Nation ສະບັບ ວັນທີ 11 ມີນາ 2019 ໄດ້ໃຫ້ຮູ້ວ່າ ສານຂອງມາເລເຊຍ ໄດ້ຕັດສິນຈຳຄຸກທ້າວ ອາຍີຍີ (Ayea Yea) ເປັນເວລາ 10 ປີກັບ 10 ເດືອນ ຍ້ອນມີຄວາມຜິດຫຼາຍກະໂທງກ່ຽວກັບການໝິ່ນປະໝາດສາສະໜາອິດສະລາມ. ນອກຈາກທ້າວ ອາຍີຍີ (ຊື່ທີ່ໃຊ້ໃນ Facebook ຂອງຜູ້ກ່ຽວ) ແລ້ວ ກໍຍັງມີອີກ 3 ຄົນຕິດແຮ້ວຄະດີປະພຶດການໝິ່ນປະໝາດ ມາດຮ້າຍຕໍ່ສາສະໜາ. ຢູ່ປະເທດ**ຍີ່ປຸ່ນ** ໃນວັນທີ 10 ທັນວາ 2022 ທາງການປະເທດນີ້ ໄດ້ຮັບຮອງເອົາກົດໝາຍຫ້າມອົງການທາງສາສະໜາ ຂໍການບໍລິຈາກເງິນ ຫຼື ແຜ່ວັດຖຸປັດໄຈຕ່າງໆ ຈາກບຸກຄົນຢ່າງເດັດຂາດ ເພາະຖືວ່າການກະທຳດັ່ງກ່າວ ເປັນການສ້າງຄວາມສັບສົນໃນສັງຄົມ. ຄຳວ່າ "ສັບສົນ" ໃນກົດໝາຍສະບັບນີ້ ໝາຍເຖິງເລ່ຫຼ່ຽມຂອງເຫຼົ່ານັກບວດທີ່ໃຊ້ເພື່ອຂໍແຜ່ເງິນ ຫຼື ວັດຖຸດ້ວຍຄຳເວົ້າ ທີ່ຫຼອກລວງໃຫ້ຫຼົງເຊື່ອ, ໃຫ້ມີຄວາມຢ້ານກົວຖ້າບໍ່ໃຫ້ການບໍລິຈາກ. ກົດໝາຍໄດ້ກຳນົດໂທດ ຕັດອິດສະລະພາບສູງສຸດ 1 ປີ ຕໍ່ສະມາຊິກຂອງອົງການຈັດຕັ້ງທາງສາສະໜາທີ່ລະເມີດກົດໝາຍສະບັບນີ້ ຫຼື ປັບໃໝເປັນເງິນ 1 ລ້ານເຢັນ (ປະມານ 130 ລ້ານກີບ). ພາຍໃຕ້ກົດໝາຍສະບັບນີ້ ຜູ້ກະທຳຜິດບໍ່ສາມາດແກ້ໂຕວ່າເງິນ ຫຼື ວັດຖຸທີ່ໄດ້ມາຈາກການແຜ່ນັ້ນ ແມ່ນມາຈາກສັດທາ-ມາຈາກຄວາມສະໝັກໃຈຂອງຜູ້ໃຫ້ທານແທ້ໆ.

ເນື່ອງຈາກວ່າກົດໝາຍ ສະບັບນີ້ພົວພັນກັບບັນຫາອ່ອນໄຫວທີ່ກະທົບທາງດ້ານຈິດໃຈຂອງສາສະນິກະຊົນ, ດັ່ງນັ້ນ ພາຍຫຼັງໄດ້ປະກາດໃຊ້ກົດໝາຍຄົບ 2 ປີ ແລ້ວ ກໍຈະມີການທົບທວນຕີລາຄາຢ່າງພາວະວິໄສ ເພາະວ່າການໃຫ້ທານນັ້ນພົວພັນກັບສິດທິຂອງພົນລະເມືອງໃນການເຊື່ອຖືສາສະໜາ.




## ເຮັດວຽກເພື່ອສາມຄົນ

#ບ່າວກະບື

ຄົນກາຍທາງຜູ້ໜຶ່ງ ແນມເບິ່ງການເຄື່ອນໄຫວຂອງຊາຍສອງຄົນໃນສວນສາທາລະນະ. ໃນນັ້ນຄົນໜຶ່ງເປັນຜູ້ຂຸດຂຸມ ສ່ວນອີກຜູ້ໜຶ່ງເຮັດໜ້າທີ່ຖົມຂຸມ. ແຂກກາຍທາງຖາມຂຶ້ນວ່າ: "ບອກໃຫ້ຮູ້ແດ່, ພວກເຈົ້າຄືມາເຮັດແບບປະຫຼາດແທ້?".

ຊາຍຜູ້ຂຸດຂຸມຕອບວ່າ: "ເອີ້... ຄືດັ່ງຊີ້. ຕາມທຳມະດາແລ້ວພວກຂ້ອຍມີນຳກັນສາມຄົນ, ເຮົາເປັນຜູ້ຂຸດຂຸມ, ບັກກ່ຳ ເປັນຄົນປູກຕົ້ນໄມ້, ແລະ ບັກກີ່ດ່າງມັນມີໜ້າທີ່ຖົມຂຸມ. ມື້ນີ້ ບັກກ່ຳເປັນໄຂ້, ມັນບໍ່ສະບາຍ. ແຕ່ກໍບໍ່ໝາຍຄວາມວ່າບັກກີ່ດ່າງກັບເຮົາຈະຢຸດວຽກ ແມ່ນບໍ່ລະ".

## WORKING FOR THREE

*#BAOKBU*

A passerby watched two men in a park. One was digging holes and the an other was filling them in again. Tell me, "said the passerby, what on earth are you doing? "

"Well, " said the one who was digging, "usually there are three of us. I dig the holes, Mr. Kam plants the trees and Mr. Kydang fills the holes. Today Mr. Kam is off ill, but that doesn't mean Kidang and I get the day off, right ?"

ອ່ານມ່ວນ ຊວນຍິ້ມ



ຮັກສາຮ່ອງລະບາຍນ້ຳ ເພື່ອທາງສະດວກໃນຍາມຝົນ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

**ຜູ້ຊີ້ນຳ :** ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ